**ສຶກສາພຣະຄັມພີພາສາລາວ**

Copyright © 2000 by BAPTISTWAY.
ສງວນລິກຂະສິດ

ອະນຸດຍາດໃຫ້ທາງຄຣິສຕະຈັກເຮັດກອບປີ້ໄດ້ຕາມຄວາມຕ້ອງການ ເພື່ອໃຊ້ຢູ່ພາຍໃນຄຣິສຕະຈັກ.  ຫ້າມຂາຍ, ຫ້າມແຈກຢາຍ, ຫລືໃຊ້ໃນທາງອື່ນໆ ໂດຍທີ່ບໍ່ໄດ້ຂຽນຄຳຮ້ອງຂໍອະນຸຍາດເສັຽກ່ອນ.  ຖ້າຢາກຊາບລາຍລະອຽດເພີ້ມເຕີມ ກະຣຸນາຕິດຕໍ່ໄປທີ່ BAPTISTWAY, Baptist General Convention of Texas, 333 North Washington, Dallas, TX 75246-1798.

ຂໍ້ຄວາມພຣະຄັມພີອ້າງອີງໃນບົດຮຽນນີ້ ໄດ້ຄັດມາຈາກປື້ມພຣະຄັມພີຕາມທີ່ໄດ້ບົ່ງຊື່ໄວ້ ລວມທັງການແປ, ແລະວັນທີຈົດທະບຽນສງວນລິຂະສິດຂອງປື້ມພຣະຄັມພີເຫລົ່ານັ້ນ.

ພິມອອກຄັ້ງທຳອິດ:  ເດືອນ ມີນາ, ໒000

BAPTISTWAY Management Team

Executive Director, Baptist General Convention of Texas: Charles Wade
Director, State Missions Commission: James Semple
Director, Sunday School/Discipleship Division: Bernard M. Spooner

Publishing consultant: Ross West, Positive Difference Communications

Language Materials Team

Bible Comments Writer for Unit 1
Houmphanh Vongsurith, First Laotian Baptist Church, Dallas, Texas
Teaching Procedures Writer for Unit 1
Houmphanh Vongsurith, First Laotian Baptist Church, Dallas, Texas
Editor for Unit 1
Phaisane Somsith, Samakeetam Baptist Fellowship, Dallas, Texas
Bible Comments Writer for Unit 2
Sidney Kahn, Saginaw Community Church, Fort Worth, Texas
Teaching Procedures Writer for Unit 2
Sidney Kahn, Saginaw Community Church, Fort Worth, Texas
Editor for Unit 2
Phaisane Somsith, Samakeetam Baptist Fellowship, Dallas, Texas
Bible Comments Writer for Unit 3
Bounhome Phommachanh, Lao-Thai Baptist, San Antonio, Texas
Teaching Procedures Writer for Unit 3
Bounhome Phommachanh, Lao-Thai Baptist, San Antonio, Texas
Editor for Unit 3
Phaisane Somsith, Samakeetam Baptist Fellowship, Dallas, Texas

Facilitator for the Laotian Team

Joe Haag, Associate Director, Christian Life Commission, Baptist General Convention of Texas
Patty Lane, New Work Consultant, Multi-Ethnic, Baptist General Convention of Texas
Nelda P. Williams, Facilitators Coordinator, Consultant, Sunday School/Discipleship Division, Baptist General Convention of Texas

## ຄຳແນະນຳສຳລັບຄຣູສອນ
## ບົດຮຽນທີ່ 1
## ການເປັນພຍານ? ໃຜ? ເຮົາ?

---

ຂໍ້ພຣະຄັມພີສຳລັບບົດຮຽນນີ້: ກິຈການ 1:1-14
ຂໍ້ພຣະຄັມພີສຳລັບເບື້ອງຫຼັງ: ກິຈການ 1
ຈຸດສຳຄັນຂອງບົດຮຽນນີ້: ສາວົກຂອງພຣະເຢຊູຄວນຈະເປັນພຍານແກ່ທຸກໆຄົນ
ຄຳຖາມເພື່ອການສຳຣວດ: ຂ້າພະເຈົ້າຈະເສີມຂຍາຍການເປັນພຍານເຣື່ອງພຣະເຢຊູຄຣິດແນວໃດແລະທາງໃດ?
ຈຸດປະສົງຂອງບົດຮຽນນີ້: ເພື່ອນຳຜູ້ຮ່ວມມືໃຫ້ສຳຣວດໃນການເປັນພຍານໄດ້ເສີມຂຍາຍອອກໄປແນວໃດແດ່?

## ແຜນສຳລັບການສອນ

ຄຳແນະນຳສຳລັບການສອນ: ແນະນຳ "Dr. Red Luke" ບາງທີ່ທ່ານໄດ້ພົບກັບທ່ານຜູ້ນີ້ມາກ່ອນ ທ່ານຜູ້ນີ້ກໍແມ່ນທ່ານໝໍລູກາຜູ້ທີ່ບັນທຶກພຣະທັມລູການັ້ນເອງ ທ່ານເປັນຜູ້ເຮັດວຽກງານຂອງພຣະເຢຊູໃນເມື່ອກ່ອນ. (ໃຫ້ຜູ້ນຶ່ງແຕ່ງຕົວເປັນທ່ານໝໍລູກາ) ເວົ້າຂ່າວປະເສີດໃຫ້ທຸກໆຄົນຟັງດັ່ງນີ້:

"ຂ້າພະເຈົ້າດີໃຈຫລາຍທີ່ໄດ້ມາພົບທ່ານໃນວັນນີ້ ທ່ານຄົງຈຳໄດ້ເຣື່ອງຂ່າວປະເສີດທີ່ຂ້າພະເຈົ້າໄດ້ກ່າວກັບທ່ານເມື່ອບໍ່ນານມານີ້. ຂ້າພະເຈົ້າກັບມາເວົ້າກັບທ່ານອີກຄັ້ງນຶ່ງ ,ຄື ເມື່ອເຮົາສຶກສາໃນພຣະທັມກິຈການຂອງພວກສາວົກ ເຮົາຈະເຫັນວ່າ ຄົນຈຳນວນ 120 ຄົນ ຮວມກັນຢູ່ຊຶ່ງເປັນສະມາຊິກທີ່ບໍ່ຮູ້ວ່າມາແຕ່ໃສ. ເມື່ອເຮົາອ່ານໄປຈົນຈົບພຣະທັມກິຈການເຮົາຈະເຫັນວ່າຂ່າວປະເສີດໄດ້ແຜ່ກວ້າງອອກໄປທົ່ວໂລກ. ເຮົາຈະເຫັນເຖິງພະລັງອຳນາດອັນໃຫຍ່ທີ່ສຸດໃນປະວັດສາດ. ຂ້າພະເຈົ້າຂໍຊັກຊວນທ່ານກັບໄປເບິ່ງວ່າ ສິ່ງທີ່ໜ້າອັສະຈັນນີ້ມີການເລີ້ມຕົ້ນແນວໃດ? ແມ່ນຫຍັງຄືກົດລັບທີ່ພາໃຫ້ພວກສາວົກເຮັດໄດ້? ແລະເຮົາຈະເຮັດວິທີໃດທີ່ຈະສຳເຣັດໃນສມັຍນີ້?

1.ຂໍໃຫ້ທຸກຄົນສງົບຈິດໃຈ: ຖາມທ່ານເຄີຍເອົາເງິນໃຫ້ບ່ອນໃດບ່ອນນຶ່ງແລ້ວຄຶດວ່າມັນຈະຊ່ວຍຫຍັງບໍ່? ທ່ານໄດ້ປ່ອນບັດໄປແລ້ວແຕ່ກໍຄຶດວ່າມັນຈະມີຫຍັງປຽ່ນແປງຍ້ອນບັດຂ້ອຍບັດດຽວບໍ່? ທ່ານເຄີຍຄຶດເຖິງບັນຫາທີ່ເກີດຂຶ້ນໃນສັງຄົມແລະກໍຄຶດວ່າຂ້ອຍຈະເຮັດສິ່ງໃດໃຫ້ດີຂຶ້ນບໍ່? ທ່ານເຄີຍອ້ອນວອນແຕ່ກໍຄຶດວ່າຈະດີຂຶ້ນບໍ່?

2. ຂໍໃຫ້ນັກຮຽນຕອບຄຳຖາມນັ້ນ: ເປັນຫຍັງບາງຄັ້ງເຮົາຈຶ່ງຄຶດວ່າຂ້ອຍເຮັດຫຍັງບໍ່ໄດ້ດອກ? (ຫາກເປັນໄປໄດ້ຄຳຕອບນັ້ນ: ຂ້ອຍມີເງິນເດືອນນ້ອຍທີ່ຈະປະກອບສ່ວນ;ຂ້ອຍບໍ່ມີອຳນາດ,ຂ້ອຍບໍ່ກ້າ,ຂ້ອຍເບິ່ງຄືຈະເຮັດບໍ່ໄດ້ດອກ ໃຫ້ເພິ່ນຜູ້ມີຄວາມຮູ້ຄວາມລັກ, ຜູ້ມີເງິນຄຳເຮັດສາ)

3. ຫາກເຮົາປຽບໃສ່ຄຣິສຕະຈັກໃນສມັຍກ່ອນ ເຮົາຈະເຫັນໄດ້ວ່າ ສະມາຊິກຂອງຄຣິສຕະຈັກທຸກຄົນເປັນຜູ້ເລີ້ມຕົ້ນການເປັນພຍານ, ເລີກໄປກວ່ານັ້ນເຮົາຈະເຫັນຣິດອຳນາດຂອງພຣະເຈົ້າໄດ້ນຳພາໃຫ້ພວກເຂົາ

ເຈົ້າເປັນພຍານຝ່າຍພຣະອົງ.

4. ໃຫ້ເຮົາຄຶດເຖິງວັນທີ່ເຮົາຈະລາກັບໄປທາງໄກ, ຫລື ລູກຂອງເຮົາຈາກໄປຮຽນທີ່ຣັຖອື່ນ, ຫລືຍ້າຍໄປຢູ່ຕ່າງຣັຖ. ເຮົາມັກຈະເວົ້າຫຍັງຕໍ່ກັນ? ເປີດໂອກາດໃຫ້ນັກຮຽນໄດ້ຄຶດແລະຕອບ.

5. ບອກເຖິງພຣະເຢຊູຢູ່ກັບສາວົກ 40 ວັນຫລັງຈາກຟື້ນພຣະຊົນ ແລະລາສາວົກກັບໄປສວັນ. ອ່ານກິຈການ 1:1-6 ແລະຖາມນັກຮຽນ ສິ່ງໃດສຳຄັນແລະຍິ່ງໃຫຍ່ສຳລັບພຣະອົງ.

6. ສັງເກດການພຣະເຢຊູເວົ້າເຖິງພຣະຣາຊແຜ່ນດິນຂອງພຣະເຈົ້າ

7. ຖາມ: ແຜ່ນດິນສວັນຂອງພຣະອົງແມ່ນຫຍັງ? ໃຫ້ນັກຮຽນຜູ້ນຶ່ງອ່ານ ມັດທາຍ 6:10 ແລະບອກວ່າ ແຜ່ນດິນສວັນໄດ້ມາຕັ້ງໃນໂລກໂດຍທີ່ເຮົາປະຕິບັດຕາມພຣະປະສົງຂອງພຣະອົງ. ເຮົາທັງຫລາຍສ້າງແຜ່ນດິນສວັນຂອງພຣະອົງໂດຍການນຳຄົນເອົາອື່ນເຂົ້າມາຫາພຣະອົງ.

8. ຖາມ: ການເສີມຂຍາຍແຜ່ນດິນສວັນມີຢ່າງໃດແດ່?

- ຈາກໂບດຂອງເຮົາ
- ຈາກຫ້ອງຮຽນຂອງເຮົາ
- ຈາກໂຕເຮົາເອງແດ່

9. ການມີຄວາມຮູ້ສຶກຢາກປະກາດນັ້ນບໍ່ພຽງພໍ. ເຮົາຄວນລົງມືກະທຳ

- ພຣະອົງໄດ້ບອກເຖິງບ່ອນທີ່ຈຳເປັນຕ້ອງອອກໄປປະກາດ. (ມັດທາຍ 28:18-20)
- ພຣະອົງສັ່ງໃຫ້ລໍຖ້າຣິດອຳນາດ "ແຕ່ຝ່າຍທ່ານຈົ່ງຄອຍຢູ່ໃນກຸງຈົນກວ່າພວກທ່ານຈະປະກອບດ້ວຍຣິດເດດທີ່ມາຈາກເບື້ອງເທິງ "(ລູກາ 24:49)
- ພຣະເຢຊູສັນຍາກັບສາວົກເຣື່ອງຣິດເດດແລະພຣະວິນຍານບໍຣິສຸດ. (ກິຈການ 1:8)
- ການສເດັດມາຂອງພຣະວິນຍານບໍຣິສຸດ "ມີລີ້ນເປັນຮູບເຫມືອນແປວໄຟໄດ້ປາກົດໃຫ້ແກ່ເຂົາເຫັນແລະລີ້ນນັ້ນແຕກກະຈາຍອອກໄປຢູ່ເທິງເຂົາທຸກຄົນຜູ້ລະລີ້ນ " (ກິຈການ 2: 3)

ບັດນີ້ທຸກຢ່າງກໍຕຽມພ້ອມແລ້ວເຮົາຍັງລໍຖ້າຫຍັງ?

10. ແບ່ງນັກຮຽນເປັນສາມກຸ່ມ: ໃຫ້ແຕ່ລະກຸ່ມອ່ານ ກິຈການ 1:8 ແລະໃຫ້ລາຍງານຈາກຫົວຫນ້າກຸ່ມ ປະມານ 4ນາທີ.

ກ. ຄຳວ່າ "ທ່ານ " ໃນຂໍ້ນີ້ທ່ານເຂົ້າໃຈຢ່າງໃດ? ພຣະອົງມຸ້ງຫວັງໃຫ້ໃຜເປັນພຍານຝ່າຍພຣະອົງ? ພວກສາວົກມີຂອບເຂດຈຳກັດເຣື່ອງອັນໃດ? ພວກເຮົາມີຂອບເຂດຈຳກັດເຣື່ອງອັນໃດ?

ຂ. ໃຜເປັນຜູ້ໂຜດປະທານຣິດອຳນາດ? ໃຜເປັນຜູ້ເວົ້າ " ຝ່າຍເຮົາ" ຫນ້າທີ່ຂອງເຮົາແລະຫນ້າທີ່ຂອງພຣະເຈົ້າຄືແນວໃດ?

ຄ. ທ່ານພົບບັນຫາໃນການເປັນພຍານໃນແຂວງຢູ່ດາຍບໍ່? (ຫມາຍເຖິງຄົນໃນເຊື້ອຊາດຂອງທ່ານເອງ) ຫລືພົບບັນຫາໃນການເປັນພຍານແກ່ຜູ້ທີ່ທ່ານຮູ້ຈັກ? ຫລືຊາມາເຣັຽ? ບ່ອນໃດທີ່ຍາກກວ່າຫມູ່?

11. ແນະນໍານັກຮຽນ: ເຮົາບໍ່ແມ່ນພຽງແຕ່ຄຶດຢາກເປັນພຍານແລະວາງແຜນເທົ່ານັ້ນ, ແຕ່ເຮົາຈໍາເປັນຕ້ອງເຮັດຫນ້າທີ່ຂອງເຮົາ.

**<u>ແນະນໍາການສອນເພີ້ມ:</u>**

ນໍາເຣື່ອງເຂົ້າສູ່ຊີວິດຈິງ: ຂຽນຄໍາຖແລງພາຣະກາບ Mission Statement. ນໍາເອົາ Mission Statement ມາຈາກການຈັດຕັ້ງອື່ນຫລືໃນໂບດຂອງທ່ານເອງໃຫ້ຜູ້ນຶ່ງອ່ານ. ແລະກັບຄືນໄປສໍາລວດນັກຮຽນທີ່ຂຽນໄວ້ໃນຫນ້າທີ 4 ຫນ້າທີ່ການຮັບໃຊ້ອົງພະເຈົ້າແມ່ນ......."
ແລະຂໍໃຫ້ນັກຮຽນໄດ້ເວົ້າໃຫ້ຫມູ່ຟັງໃນຄໍາຖແລງການຂອງລາວ.

<u>ຄຣູສອນສລຸບສັ້ນໆແລະຖາມ:</u> ພຣະເຢຊູໄດ້ໃຊ້ເວລາ 40ວັນກັບສາວົກຫລັງຈາກການຄືນມາຈາກຕາຍເພື່ອສືບຕໍ່ພາຣະກິຈຂອງພຣະອົງ:

- ກິຈການ 1:2 ພຣະອົງຊົງບອກເຖິງພຣະວິນຍານບໍຣິສຸດ. ແລະຂໍ້ນີ້ໄດ້ສັ່ງຫຍັງພວກເຮົາບໍ່?
- ກິຈການ 1:3 ພຣະອົງສະແດງການຄືນມາຈາກຕາຍໃຫ້ສາວົກເຫັນ.ເຮົາຈະບອກເຖິງການຄືນມາຈາກຕາຍຂອງພຣະອົງໃຫ້ຜູ້ອື່ນຢ່າງໃດ?
- ກິຈການ 1:4 ພຣະອົງໄດ້ສອນເຣື່ອງແຜ່ນດິນສວັນ. ເຮົາຈະເຮັດແນວໃດເພື່ອຈະໃຫ້ຄົນທັງຫລາຍເຂົ້າມາໃນແຜ່ນດິນສວັນນີ້?

ແນະນໍານັກຮຽນຫາກອ່ານພາສາອັງກິດໄດ້ໃຫ້ອ່ານ John Bunyan ຂຽນປື້ມ <u>Grace Abounding to the Chief of Sinners</u>. <u>The Pilgrim's progress</u>; Charles Colson ຂຽນ <u>Born Again;</u> Billy Graham ຂຽນປື້ມ <u>Just as I am</u>; ແລະໃນອາທິດນີ້ທ່ານຈະເລີ້ມຕົ້ນເປັນພຍານແນວໃດ?

# ຄຳແນະນຳສຳລັບຄຣູສອນ
# ບົດຮຽນທີ 2
# ອຳນາດໂດຍພຣະວິນຍານບໍຣິສຸດ? ໃຜ? ເຮົາ?

---

ຂໍ້ພຣະຄັມພີສຳລັບບົດຮຽນນີ້: ກິຈການ 2:1-16,22-24,36-41
ຂໍ້ພຣະຄັມພີສຳລັບເບື້ອງຫຼັງ: ກິຈການ 2
ຈຸດສຳຄັນຂອງບົດຮຽນນີ້: ສາວົກຂອງພຣະເຢຊູໄດ້ຮັບອຳນາດພຣະວິນຍານບໍຣິສຸດ, ເປໂຕຊັກຊວນຄົນທັງຫລາຍໃຫ້ກັບໃຈ, ຮັບສິນບັບຕິສມາ, ແລະຮັບພຣະພອນຂອງພຣະວິນຍານດ້ວຍຕົນເອງ
ຄຳຖາມເພື່ອການສຳຣວດ: ຂ້າພະເຈົ້າຈະເປີດກວ້າງຣິດອຳນາດພຣະວິນຍານໃນການເປັນພຍານຝ່າຍພຣະຄຣິດຢ່າງໃດ?
ຈຸດປະສົງຂອງບົດຮຽນນີ້: ເພື່ອອະທິບາຍໃຫ້ເພື່ອນຮ່ວມງານຂອງອົງພຣະຜູ້ເປັນເຈົ້າໄດ້ເຂົ້າໃຈຄວາມໝາຍເຣື່ອງການຮັບອຳນາດຂອງພຣະວິນຍານບໍຣິສຸດ

## ແຜນສຳລັບການສອນ

ນຳເຣື່ອງເຂົ້າສູ່ຊີວິດ

1. ເອົາຖົງມືເຮັດວຽກມາຄູ່ນຶ່ງມາວາງໄວ້. ຖາມນັກຮຽນວ່າ ເປັນຫຍັງຖົງມືບໍ່ໄປເຮັດວຽກ?

2. ຈັບຖົງມືຂຶ້ນສູງແດ່ແລ້ວກໍເອົາມືຂອງທ່ານສຸບເຂົ້າໄປ ແລະກໍບອກນັກຮຽນວ່າ ເມື່ອເອົາຖົງມືວາງໄວ້ທີ່ນັ້ນບໍ່ມີປໂຍດຫຍັງ ແຕ່ເມື່ອເອົາມາສຸບໃສ່ມືແລ້ວຖົງມືນັ້ນກໍເລີ່ມເຮັດວຽກໄດ້. ການຮັບອຳນາດຈາກພຣະວິນຍານກໍເປັນດັ່ງນັ້ນແຫລະ ເມື່ອຮັບອຳນາດກໍເຮັດວຽກໄດ້ດີ.

3. ສລຸບບົດຮຽນເຣື່ອງວັນເພັນເຕຄໍສະເຕ. ທ່ານໄດ້ຮັບພຣະວິນຍານແລ້ວບໍ່?

4. ຂໍໃຫ້ຜູ້ນຶ່ງອ່ານ ກິຈການ 2:1-11 ສັງເກດການສະເດັດມາຂອງພຣະວິນຍານ, ພວກເຂົາເຈົ້າເວົ້າພາສາແປກໆທີ່ເປັນພາສາຂອງມະນຸດໃນໂລກແລະຄົນແຕ່ລະຊາດຟັງກໍເປັນພາສາເຂົາເຈົ້າ.

5. ການອັສຈັນວັນນັ້ນມີຄວາມໝາຍແນວໃດສຳລັບວັນນີ້? ຄຳຕອບອາຈມີຫລາຍຢ່າງ ສິ່ງທີ່ທ່ານຈະເພີ້ມອີກຄື ນັ້ນແມ່ນການສແດງເຖິງຣິດເດດຂອງພຣະວິນຍານນຳພາແຕ່ລະຊາດພາສາໃຫ້ຮູ້ຈັກກັບພຣະອົງຈາກຜູ້ຮັບໃຊ້ພຣະອົງ ຄືທ່ານແລະຂ້າພະເຈົ້າ.

6. ແບ່ງຫ້ອງຮຽນເປັນ 3 ຈຸ ເອົາກະດາດແຜ່ນໃຫຍ່ແລະແນວຂຽນໃຫ້ທັງສາມຈຸ

- ໃຫ້ຈຸທີ່ 1 ຂຽນຕອບຄຳຖາມ ເຮົາຈະເຕັມໄປດ້ວຍພຣະວິນຍານໄດ້ຢ່າງໃດ?
- ໃຫ້ຈຸທີ່ 2 ຂຽນຕອບຄຳຖາມ ການປາກພາສາແປກເປັນເຄື່ອງພິສູດວ່າເຮົາໄດ້ເຕັມໄປດ້ວພຣະວິນຍານບໍ່?

- ໃຫ້ຈຸທີ່ 3 ອ່ານ 1ໂກຣິນໂທ 14:1-19 ແລະຂຽນລົງໃນເຣື່ອງພາສາແປກໆສຳຄັນຢ່າງໃດ?

7. ໃຫ້ແຕ່ລະຈຸມາລາຍງານສິ່ງທີ່ຂຽນລົງ. ພຣະຄັມພີບໍ່ໄດ້ບອກເຮົາວ່າເຮົາຈຳເປັນຕ້ອງເວົ້າພາສາແປກໆໄດ້ເພື່ອຈະຮັບຄວາມລອດພົ້ນ. ຈົ່ງຊີ້ໃຫ້ນັກຮຽນເຫັນວ່າ ເຮົາທັງຫລາຍໄດ້ຮັບພຣະວິນຍານດ້ວຍຄວາມເຊື່ອ.

8. ເຊີນໃຫ້ນັກຮຽນອ່ານ ກິຈການ 2:12-13 ແລະຖາມຄຳຖາມນີ້:

- ເມື່ອຄຣິສຕຽນໄດ້ເວົ້າເຣື່ອງພຣະເຈົ້າອົງຍິ່ງໃຫຍ່ຜູ້ຟັງໄດ້ຍິນຫຍັງ?
- ແລະຍິ່ງໄປກວ່ານັ້ນຄົນຟັງມີຄວາມຮູ້ສຶກແນວໃດ?

9. ໃຫ້ຜູ້ນຶ່ງອ່ານ ກິຈການ 2:14-16,22-24, 36 ນີ້ແມ່ນຄຳປາໄສຂອງເປໂຕ

- ເປໂຕໄດ້ຕອບຝູງຊົນແນວໃດ?
- ເປໂຕໄດ້ຕອບແນວໃດອີກຕໍ່ຄຳວິພາກວິຈານເຂົາເຈົ້າ.

10. ຊີ້ໃຫ້ນັກຮຽນເຂົ້າໃຈວ່າ ເປໂຕໄດ້ຢັ້ງຢືນການເປັນພຍານຝ່າຍພຣະວິນຍານ. ຄຣູເອົາຖົງມືມາສວມອີກຖົງມືເປັນຂອງເຮັດວຽກແຕ່ຈະເຮັດດ້ວຍຖົງມືເອງບໍ່ໄດ້ຕ້ອງເອົາມືຄົນສວມເຂົ້າໄປຈຶ່ງໃຊ້ໄດ້. ເປໂຕທີ່ເຕັມໄປດ້ວຍພຣະວິນຍານຈຶ່ງກ່າວດ້ວຍໃຈກ້າຫານແລະກໍເກີດຜົນດີດ້ວຍ ເພາະເປໂຕເຕັມໄປດ້ວຍພຣະວິນຍານ.

11. ຂໍໃຫ້ຜູ້ນຶ່ງອ່ານ ກິຈການ 2:37-41 ແລະສັງເກດຂໍ້ 37 "ເຈັບຊ້ຳກິນແຫນງໃຈ" ຊຶ່ງສອນໃຫ້ເຮົາອອກໄປເປັນພຍານ ສ່ວນຄົນທີ່ຈະກັບໃຈຫລືບໍ່ນັ້ນເປັນຫນ້າທີ່ຂອງພຣະວິນຍານຈະນຳພາໃຫ້ເຂົາເຈົ້າກັບໃຈ (ບໍ່ແມ່ນທ່ານ)

12: ການອັສຈັນທີ່ໃຫຍ່ກ່ຽວກັບຄົນມາຮັບເຊື່ອພຣະເຈົ້າ. ຕອນແຮກເຮົາເຫັນການອັສຈັນໃນວັນເພັນເຕຄໍສະເຕ ເຮັດໃຫ້ເຮົາເຫັນການອັສຈັນໃນຈຳພວກສາວົກ ແລະຕໍ່ໄປເຮົາຈະເຫັນສາວົກພວກນີ້ແຫລະໄດ້ນຳຄົນຈຳນວນຫລວງຫລາຍເຂົ້າມາຮັບຣິດເດດຝ່າຍພຣະວິນຍານດ້ວຍຕົວເອງ.

13: ອີງຕາມການຄົ້ນຄວ້າຂອງເຮົາວັນນີ້ <u>ການເຕັມໄປດ້ວຍພຣະວິນຍານ</u> ຫມາຍຄວາມວ່າແນວໃດ? ຂໍໃຫ້ນັກຮຽນຕອບຄຳຖາມ ຕົວຢ່າງ ຄົນທີ່ເຕັມໄປດ້ວພຣະວິນຍານໃນສມັຍນີ້: ຖາມ

- ຕົວຢ່າງພຣະວິນຍານຊົງນຳພາຄຣິສຕຽນທຸກມື້ນີ້ແນວໃດ?
- ພວກເຂົາເຈົ້າໄດ້ຍອມໃຫ້ພຣະວິນຍານນຳພາຢ່າງໃດ?
- ຜົນປາກົດການສ້າງຣາຊອານາຈັກສວັນເປັນແນວໃດ?

14: ຜົນປາກົດຂອງພວກເຮົາທີ່ຍອມໃຫ້ພຣະວິນຍານຊົງນຳໃນການເປັນພຍານເປັນແນວໃດ?

ແນະນຳການສອນເພີ້ມ:
ນຳເຣື່ອງເຂົ້າສູ່ຊີວິດຈິງ: ຂໍໃຫ້ນັກຮຽນພິຈາຣະນາດັ່ງຕໍ່ໄປນີ້ຢ່າງສງົບ: ອາທິດນີ້ການເປັນພຍານຂອງທ່ານເປັນແນວໃດ? ການເປັນພຍານອາທິດທີ່ຜ່ານມາມີບັນຫາອັນໃດແດ່? ໃນຊີວິດຂອງເຮົາແມ່ນສິ່ງໃດທີ່ເຮັດຍາກໃນການຈະປະຕິບັດຕາມພຣະວິນຍານບໍຣິສຸດ? ມີສິ່ງໃດເຮົາຄວນຈະປຽ່ນ? ຈະຕ້ອງເຮັດແນວໃດຈະເຮັດໄດ້?

ຄຣູສອນສລຸບສັ້ນໆແລະຖາມ: ທ່ານຮູ້ຈັກກັບພຣະເຈົ້າແນວໃດ? ຄົນທີ່ເວົ້າຂ່າວປະເສີດໃຫ້ທ່ານຟັງຄັ້ງແຣກນັ້ນທ່ານຄິດແນວໃດກັບຄົນນັ້ນໃນເວລານັ້ນ ແລະໃນເວລານີ້? ຢ່າແປກໃຈເມື່ອທ່ານເວົ້າຂ່າວປະເສີດໃຫ້ໃຜຜູ້ນຶ່ງຟັງແລະເພິ່ນປະຕິເສດທີ່ຈະຮັບເຊື່ອ ເພາະທ່ານເປັນຜູ້ນັ້ນມາກ່ອນ.

## ຄຳແນະນຳສຳລັບຄຣູສອນ
## ບົດຮຽນທີ 3
## ຊ່ວຍເຫລືອຄວາມຈຳເປັນ? ໃຜ? ເຮົາ?

---

ຂໍ້ພຣະຄັມພີສຳລັບບົດຮຽນນີ້: ກິຈການ 3:1-10
ຂໍ້ພຣະຄັມພີສຳລັບເບື້ອງຫຼັງ: ກິຈການ 3
ຈຸດສຳຄັນຂອງບົດຮຽນນີ້: ເປໂຕແລະໂຢຮັນຊ່ອຍເຫລືອຄົນດ້ວຍຣິດອຳນາດຂອງພຣະເຢຊູ
ຄຳຖາມເພື່ອການສຳຣວດ: ການຊ່ວຍເຫລືອຄວາມຈຳເປັນຕໍ່ມະນຸດມີຄວາມຈຳເປັນແນວໃດສຳລັບ ຄຣິສຕະຈັກຂອງທ່ານ
ຈຸດປະສົງຂອງບົດຮຽນນີ້: ໃຫ້ຮູ້ວ່າພຣະເຈົ້າຊົງເອີ້ນທ່ານມາໃຫ້ຮູ້ຈັກຄວາມຈຳເປັນຂອງເພື່ອນມະນຸດ

### ແຜນສຳລັບການສອນ

ນຳເຣື່ອງເຂົ້າສູ່ຊີວິດ

1. ເອົາເຈັ້ຽຂາວໃຫ້ນັກຮຽນຂຽນຊື່ຄົນທີ່ເຂົາເຈົ້າບໍ່ຮູ້ຈັກກັນແຕ່ຮູ້ຊື່ໃນຂະນະທີ່ໄປເຮັດວຽກທຸກວັນ

2. ຂຽນຕໍ່ໄປວັນນີ້ທ່ານຈະພົບກັບຄົນຜູ້ນີ້ ເຫມືອນເປໂຕແລະໂຢຮັນໄດ້ພົບກັບຊາຍງ່ອຍດ້ວຍຣິດເດດຂອງ ພຣະເຢຊູຄຣິດ, ທ່ານຈະເຮັດແນວໃດ?

3. ເວົ້າລື້ມຄືນເຣື່ອງການປະກາດຂ່າວປະເສີດໃຫ້ແກ່ທຸກຄົນ ໂດຍສະເພາະຢ່າງຍິ່ງໃນບົດຮຽນຂອງນັກຮຽນ ບ່ອນສັງເກດເບິ່ງ ຈະເຫັນວ່າເປໂຕແລະໂຢຮັນໄປອ້ອນວອນທີ່ພຣະວິຫານທຸກວັນເປັນທັມມະດາ ເຊັ່ນດຽວ ກັບ ເຮົາໄປເຮັດວຽກແຕ່ລະວັນ.

4. ຂໍໃຫ້ຜູ້ນຶ່ງອ່ານ ກິຈການ 3:1-3 ແລະສັງເກດເບິ່ງ "ເຂົ້າບໍຣິເວນພຣະວິຫານ" ແມ່ນເປໂຕແລະໂຢຮັນໄດ້ເຮັດ ຢ່າງນີ້ເປັນປະຈຳແລະກໍເປັນການປະຊຸມອ້ອນວອນປະຈຳວັນ {The living Bible} (ເວລາເກົ້າໂມງແປວ່າ ຊົ່ວໂມງທີ 9. ຈາກ 6 ໂມງເຊົ້າເຖິງ 7 ໂມງເປັນຊົ່ວໂມງທີ 1, ສລຸບແລ້ວແມ່ນເວລາ 3 ໂມງແລງ)

5. ຖາມ. ມີຄົນຈຳພວກໃດແດ່ນອກຈາກມາໃນບໍຣິເວນພຣະວິຫານ? ທ່ານຄຶດວ່າທ່ານເຫັນເຂົາເຈົ້າບໍ່? ຫາກ ເຂົາເຈົ້າບໍ່ໄດ້ມາທີ່ນີ້?

6. ຄຣູ ຂຽນ "ບໍ່ມີ" ແລະ "ມີ" ໂຕໃຫຍ່ໃສ່ກະດານ

7. ຂໍໃຫ້ຜູ້ນຶ່ງອ່ານ ກິຈການ 3:4-5. ສິ່ງໃດທີ່ມີແລະບໍ່ມີ. ທ່ານມີແລະບໍ່ມີແບບດຽວກັບເປໂຕແລະໂຢຮັນບໍ່? ສິ່ງທີ່ທ່ານມີທ່ານໄດ້ເອົາໃຫ້ບໍ່?

8. ຂໍໃຫ້ຜູ້ນຶ່ງອ່ານ ກິຈການ 3:6 -8 ແລະແບ່ງນັກຮຽນຈຸລະສາມຫລືສີ່ຄົນ ໃຫ້ແຕ່ລະຈຸເຮັດ

- ຄົ້ນຄວ້າກິຈການ 3:6 ຄວາມສຳຄັນຂອງ ເຊື່ອໃນພຣະນາມ, ຫລື ໃນພຣະນາມ
- ຂໍ້ 7 ເປໂຕເຮັດແນວໃດ? ທ່ານໄດ້ເຮັດຢ່າງນີ້ຫລືຍັງ? ເປັນຫຍັງຈຶ່ງເຮັດຫລືບໍ່ເຮັດ?
- ຂໍ້ 8 ຊາຍງ່ອຍເຮັດຫຍັງ? ສຳຄັນແນວໃດ? ເປັນຫຍັງຈຶ່ງເປັນການສຳຄັນແທ້? ທ່ານໄດ້ຮຽນຫຍັງແດ່?

9. ຂໍໃຫ້ຈັກສີ່ຄົນອ່ານ 1.ມັດທາຍ 9:9-13; 2.ມັດທາຍ 15:30-31; 3.ມາຣະໂກ 2:1-12; 4.ລູກາ 7:21-22. ໃຫ້ນັກຮຽນຂຮຽນແຕ່ລະຂໍ້ໄດ້ສອນຫຍັງເຮົາແດ່? ພຣະເຢຊູສົງສານເຮົາແນວໃດ? ເປໂຕ ແລະ ໂຢຮັນເຮັດແນວໃດເພື່ອສະແດງອອກໃນການສົງສານ?

10. ອາທິດແລ້ວເຮົາໄດ້ຮຽນເຮື່ອງພຣະວິນຍານບໍຣິສຸດລົງມາສະຖິດນຳ . ຕັ້ງຄຳຖາມ ຫາກທ່ານມີພຣະວິນ ຍານ ບໍຣິສຸດສະຖິດນຳທ່ານແລ້ວທ່ານຄຶດວ່າຈະສາມາດເຮັດຄືເປໂຕແລະ ໂຢຮັນໄດ້ບໍ່? ເປັນຫຍັງທ່ານບໍ່ມີ ຫລືມີພຣະວິນຍານບໍຣິສຸດສະຖິດນຳ?

11. ໃຫ້ນັກຮຽນແຕ່ລະຄົນອ່ານ ກິຈການ 3:9 -10 ອ່ານດ້ວຍຕົນເອງງຽບໆ ແລະພາກັນມາສລຸບ ທ່າທີຂອງຄົນ ໃນພຣະວິຫານ.

- ບອກນັກຮຽນວ່າ ການໃຫ້ເງິນຄຳເປັນຂອງງ່າຍກວ່າການແຕະຕ້ອງສຳພັດຄົນປ່ວຍ.
- ຖາມ. ວັນນັ້ນຫາກເປໂຕແລະ ໂຢຮັນບໍ່ໄປບໍຣິເວນພຣະວິຫານຊາຍງ່ອຍນັ້ນຈະເປັນແນວໃດ? ຫາກທ່ານບໍ່ອອກໄປຫລາຍຄົນທີ່ຕ້ອງການຄວາມຊ່ວຍເຫລືອຈະເປັນແນວໃດ?

12. ແນະນຳນັກຮຽນ ນອກຈາກເຮື່ອງໃນພຣະຄັມພີຕອນນີ້ແລ້ວຍັງມີອີກຫລາຍຄົນໃນບໍຣິເວນບ້ານເຮືອນຂອງ ເຮົາກຳລັງຕ້ອງການຄວາມຊ່ວຍເຫລືອ ອາຈເປັນທາງໃດທາງນຶ່ງທີ່ເຂົາເຈົ້າບໍ່ຮູ້ສຶກຕົວ ແຕ່ທ່ານໄດ້ເຫັນ ຄວາມຕ້ອງການຂອງເຂົາເຈົ້າຄືຈິດວິນຍານເປັນງ່ອຍ ຫລືຕ້ອງການບັງເກີດຝ່າຍຈິດວິນຍານ. ຢ່າລືມວ່າ ຄວາມບາບໄດ້ມາປິດບັງບໍ່ໃຫ້ຄົນທັງຫລາຍເຫັນຄວາມຕ້ອງການຂອງຈິດວິນຍານ.

ນຳບົດຮຽນໄປໃຊ້ກັບຊີວິດ

ກ. ສົມມຸດວ່າທ່ານກຳລັງຍ່າງຈາກຣົດແລະຂ້າມທາງໄປຕຶກຂອງໂບດ ແລະເຫັນຜູ້ຍິງຄົນນຶ່ງນຸ່ງ ເສື້ອງເກົ່າໆ ເດັກນ້ອຍໃນຣົດຄັນນັ້ນຖາມທ່ານວ່າ "ຂ້ອຍຈະໄປຂໍເງິນນຳໃຜໃນໂບດມາຊື້ນ້ຳມັນໃສ່ຣົດ ພໍແລ່ນໄປຮອດບ້ານ" ທ່ານຈະແນະນຳນາງຢ່າງໃດ?

ຂ. ສົມມຸດວ່າທ່ານກິນເຂົ້າທ່ຽງທີ່ໂຮງງານແລະຫລຽວໄປເຫັນຄົນຜູ້ນຶ່ງນັ່ງຫ່າງໄກຈາກຫມູ່ ເພາະຂາດ ເພື່ອນ ຫລືຄົນໃນໂຮງງານບໍ່ມັກລາວເພາະລາວເປັນຄົນບໍ່ດີແຕ່ທ່ານຄຶດແນວໃດ?

ຄ. ສົມມຸດວ່າຄົນຫນຸ່ມໃນໂບດຂອງເຮົາຄົນນຶ່ງທີ່ບໍ່ເຄີຍມາໂບດຫລືມາເປັນບາງຄັ້ງ ລາວແຕ່ງຕົວກໍ

ຕ່າງຫມູ່ແດ່ ເບິ່ງທ່າທາງ ໂສກເສົ້າຫລືທ່າທາງບໍ່ເປັນຕາເອົາ, ທ່ານຄຶດວ່າແນວໃດ?
<u>ແບ່ງນັກຮຽນເປັນສາມຈຸ.</u> ແຕ່ລະຈຸອ່ານ ກິຈການ 3:1-10 ໃຫ້ຈຸທີ່ນຶ່ງເປັນເປໂຕແລະ ໂຢຮັນ, ຈຸທີ່ສອງເປັນຊາຍງ່ອຍ, ແລະຈຸທີ່ສາມເປັນຝຸງຊົນໃນພຣະວິຫານ.

- ຄົນທັງຫລາຍໄປພຣະວິຫານເວລາສາມ ໂມງແລງເຮັດຫຍັງ?
- ໃນຄວາມນຶກຄຶດຂອງຄົນທັງຫລາຍເປັນແນວໃດ?
- ຄົນທີ່ເຫັນການອັສຈັນເກີດຂຶ້ນນອກຈາກສງົບສົນເທກັນແລ້ວທ່ານຄຶດວ່າບາງຄົນຈະເປັນແນວໃດ? ໃຫ້ແຕ່ລະຈຸລາຍງານສະພາບຂອງເຂົາເຈົ້າ.

<u>ສລຸບ</u>: ຊາຍງ່ອຍມາແຕ່ເກີດຜູ້ນີ້ມານັ່ງຂໍທານເພື່ອລ້ຽງທ້ອງແຕ່ລະວັນໆ ສາວົກຂອງພຣະເຢຊູມີຂອງດີກວ່ານັ້ນໃຫ້ແກ່ຊາຍຄົນນີ້ ຄືໃນພຣະນາມພຣະເຢຊູ.

# ຄຳແນະນຳສຳລັບຄຣູສອນ
# ບົດຮຽນທີ 4
# ຖືກປອງຮ້າຍກໍບໍ່ຢ້ານ? ໃຜ? ເຮົາ?

---

ຂໍ້ພຣະຄັມພີສຳລັບບົດຮຽນນີ້: ກິຈການ 4:1-20
ຂໍ້ພຣະຄັມພີສຳລັບເບື້ອງຫຼັງ: ກິຈການ 4:1-31; 5:12-42
ຈຸດສຳຄັນຂອງບົດຮຽນນີ້: ເປໂຕແລະໂຢຮັນຖືກປອງຮ້າຍແຕ່ຍັງເຊື່ອໝັ້ນໃນພຣະເຈົ້າ
ຄຳຖາມເພື່ອການສຳຣວດ: ທ່ານຈະເຮັດແນວໃດເມື່ອຖືກຄົນໃນເຊື້ອຊາດກ່າວໃສ່ຮ້າຍ, ດ່າວ່າ?
ຈຸດປະສົງຂອງບົດຮຽນນີ້: ເພື່ອເຕືອນໃຫ້ຮູ້ວ່າທ່ານກໍຈະຖືກຄົນຂອງທ່ານເອງເປັນຜູ້ຕໍ່ສູ້ທ່ານ.

## ແຜນສຳລັບການສອນ

ນຳເຣື່ອງເຂົ້າສູ່ຊີວິດ

1. ແມ່ນຫຍັງຄືສິ່ງຕໍ່ສູ້ຄຣິສຕຽນໃນອະເມຣິກາທຸກວັນນີ້? ໃນຊີວິດຂອງທ່ານເດແມ່ນຫຍັງຕໍ່ສູ້ທ່ານ?

2. ຂຽນ "Wei Gee" ແລະ "Juean Gee" ໃສ່ກະດານ. ເປັນພາສາຈີນທີ່ແປວ່າ ພາວະສຸກເສີນ ແລະ ໂອກາດ ຈົ່ງປ່ຽນພາວະສຸກເສີນ ມາເປັນໂອກາດດີ. ຊຶ່ງເຮົາໄດ້ເຫັນເປໂຕແລະໂຢຮັນເຮັດມາແລ້ວ.

3. ອ່ານໂຢຮັນ 15:20 ພຣະເຢຊູໄດ້ບອກເຕືອນສາວົກລ່ວງໜ້າໃນສິ່ງທີ່ຈະເກີດຂຶ້ນ ແລະເປັນໂອກາດດີໃນການເປັນພຍານ.

4. ຂໍໃຫ້ຜູ້ນຶ່ງອ່ານ ກິຈການ 4:1-3 . ກ່ອນຈະອ່ານໃຫ້ແບ່ງນັກຮຽນເປັນສາມຈຸຄື; ຈຸທີ1 ເປັນພວກປະໂລຫິດ, ຈຸທີ 2 ເປັນທະຫານຮັກສາພຣະວິຫານ ແລະຈຸທີ 3 ເປັນ ພວກຊາດູກາຍ. ເມື່ອອ່ານຈົບແລ້ວໃຫ້ນັກຮຽນແຕ່ລະຈຸອອກຄຳເຫັນຂອງຄະນະແລະໃນຖານະຂອງເຂົາເຈົ້າເປັນຢູ່ໃນພຣະວິຫານ. ເປັນຫຍັງ?

5. ໃນຂໍ້ 3 ພວກທະຫານເຮັດຫຍັງກັບເປໂຕແລະໂຢຮັນ? ເປັນຫຍັງ?

6. ໃຫ້ທຸກຄົນເບິ່ງຂໍ້ 4 ຈະເຫັນວ່າເປໂຕແລະໂຢຮັນຖືກພັຍອັນຕະລາຍແຕ່ເຫດການນີ້ກໍສັຣເສີນພຣະເຈົ້າ.

7. ອ່ານ ມັດທາຍ 5:10 . ການຖືກຂົ່ມເຫງເພາະຄວາມຊອບທັມແລະການຖືກຂົ່ມເຫງເພື່ອຜົນປໂຫຍດສ່ວນຕົວມີຫຍັງແຕກຕ່າງກັນ? ເຮົາຖືກຄົນປະຕິເສດເພາະຄວາມເຊື່ອຂອງເຮົາປັຈຸບັນນີ້ເປັນຜົນສະທ້ອນແລະໂອກາດດີແນວໃດ?

8: ໃຫ້ຜູ້ນຶ່ງອ່ານ ກິຈການ 4:5-7 . ຖາມ ເມື່ອເຮົາໄດ້ຍິນດັ່ງນີ້ແລ້ວມັນຂູ່ເຂັນເຮົາຢ່າງໃດ? ໃນກິຈການ 4:7 ເປໂຕແລະໂຢຮັນຖືກນັ່ງຖ້າມກາງຄົນມີຄວາມຮູ້ທັງສລາດຫລັກແຫລມ (ສານແຊນຮີດຣີນ) ແລະຕົ້ນໄປ

ດ້ວຍອຳນາດສາມາດໃຫ້ເປັນແລະຕາຍໄດ້. ຫາກທ່ານເປັນເປໂຕແລະໂຢຮັນຈະເປັນແນວໃດ?

9. ໃຫ້ນັກຮຽນອ່ານ ກິຈການ 4:8-12. ເປໂຕເວົ້າດ້ວຍຣິດອຳນາດແນວໃດ? ເປໂຕໄດ້ຕອບແນວໃດ?

10. ອ່ານຂໍ້ 13. ແລະໃຫ້ນັກຮຽນສົນທະນາກັນ ເຖິງຄວາມຮູ້ໃນການຕອບຄຳຖາມທີ່ເປໂຕແລະໂຢຮັນຕອບຄຳຖາມຂອງສານ ແຊນຮີດຣິນ?

11. ບອກນັກຮຽນເຂົ້າໃຈວ່າ ເປໂຕແລະໂຢຮັນປ່ຽນໂອກາດທີ່ຖືກຂົ່ມເຫັງນີ້ເປັນພຍານຝ່າຍພຣະເຢຊູຄຣິດ.

12. ໃຫ້ຜູ້ນຶ່ງອ່ານຂໍ້ 14-19. ຄະນະສານ ແຊນຮີດຣິນມີທ່າທີແນວໃດ? ເປໂຕແລະໂຢຮັນໄດ້ຫຍັງໃນການເປັນພຍານ? ໃນທີ່ສຸດທ່ານທັງສອງເປັນແນວໃດ?

13. ໃຫ້ຜູ້ນຶ່ງອ່ານຂໍ້ 21-33 ເປັນຫຍັງເຂົາຈຶ່ງເຫັນແກ່ຜົລເມືອງໃນທີ່ນັ້ນ? ອຳນາດທີ່ມີເປັນຫຍັງບໍ່ສັ່ງຂ້າເສັຍ? ເປັນຫຍັງສານ ແຊນຮີດຣິນ ຈຶ່ງຫມົດອຳນາດ? ຄຣິສຕຽນເຮັດຫຍັງໃນຂໍ້ 29-30?

<u>ບົດຮຽນທີ່ໄປໃຊ້ກັບຊີວິດ</u>

- ສາວົກທັງສອງເຕັມໄປດ້ວຍພຣະວິນຍານຈຶ່ງບໍ່ຢ້ານຕໍ່ການຂູ່ເຂັນ.
- ເຂົາເຈົ້າປະກາດພຣະນາມພຣະເຢຊູແລະກໍໄດ້ຮັບຜົນສຳເຣັດໃນພຣະນາມພຣະເຢຊູ
- ສາວົກປຽ່ນເວລາຂອງການຂູ່ເຂັນມາເປັນໂອກາດ.
- ທ່ານຈະເຮັດແນວໃດເພື່ອພິສູດຄວາມກ້າຫານຂອງທ່ານໃນການປະກາດພຣະນາມພຣະເຢຊູໃນອາທິດນີ້?.

ຄຳແນະນຳສຳລັບຄູສອນ

ບົດຮຽນທີ 5

ແບ່ງປັນຂ່າວປະເສີດກັບຄົນທີ່ແຕກຕ່າງກັບເຮົາ

--------------------------------------------------------------------------------

ຂໍ້ພຣະຄັມພີສຳລັບບົດຮຽນນີ້: ກິຈການ 8:4-8; 26-38

ຂໍ້ພຣະຄັມພີສຳລັບເບື້ອງຫຼັງ: ກິຈການ 8

ຈຸດສຳຄັນຂອງບົດຮຽນນີ້: ຟີລິບປະກາດຂ່າວປະເສີດກັບຊາວຊາມາເຣັຽ ແລະຊາວເອທີໂອເປັຽຄົນນຶ່ງ; ຊຶ່ງຕາມປະເພນີແລ້ວ ຊາວຢິວຈະບໍ່ຍອມຮັບຮູ້ຄົນພວກນີ້.

ຄຳຖາມເພື່ອການສຳຣວດ: ທ່ານພ້ອມແລ້ວບໍ່ທີ່ຈະໄປປະກາດກັບຝູງຄົນທັງຫຼາຍທີ່ປະເພນີຂອງທ່ານຖືວ່າເປັນຜູ້ທີ່ແຕກຕ່າງກັບທ່ານແລະບໍ່ສົມຄວນຈະຮັບໄວ້ໄດ້.

ຈຸດປະສົງຂອງການສອນ: ເພື່ອຊ່ວຍນັກຮຽນໃຫ້ເຂົ້າໃຈເຖິງອຸປສັກທີ່ເຂົາແລະຄຣິສຕະຈັກຂອງເຂົາຈະຕ້ອງຜ່ານອ້ານເພື່ອໄປແບ່ງປັນຂ່າວປະເສີດກັບຄົນທັງຫຼາຍຕາມປົກຕິແລ້ວເຫັນວ່າແຕກຕ່າງກັບທ່ານແລະບໍ່ສົມຄວນຈະຮັບໄວ້ໄດ້.

## ແຜນສຳລັບການສອນ

ນຳເຣື່ອງເຂົ້າສູ່ຊີວິດຈິງ ( 5 ນາທີ)

1. ຊ່ວຍນັກຮຽນໃຫ້ເຂົ້າໃຈວ່າ ການໄດ້ຍິນພຣະທັມເທົ່ານັ້ນບໍ່ພຽງພໍ, ແຕ່ການເຮັດຕາມສິ່ງທີ່ພຣະທັມສັ່ງສອນນັ້ນເປັນສິ່ງທີ່ຈຳເປັນ.
2. ບອກໃຫ້ນັກຮຽນແບ່ງປັນເຣື່ອງອຸປສັກຂອງການເປັນພຍານຂອງເຂົາ (ບໍ່ມີເວລາ, ຢ້ານ ຫລືອາຍ, ບໍ່ມັກຄົນບາງພວກ)
3. ຊ່ວຍນັກຮຽນໃຫ້ເອົາຊະນະອຸປສັກຕ່າງໆເພື່ອເຂົາຈະໄດ້ເປັນພຍານ (ຍົກຕົວຢ່າງຂອງ ຟີລິບ)

ນຳພາການສຶກສາພຣະທັມ (30 ນາທີ)

4. ອ່ານ ແລະ ອະທິບາຍ ກິຈການ 8:4-8; ໃຊ້ຄຳຖາມຕໍ່ໄປນີ້ເພື່ອຊ່ວຍນັກຮຽນໃຫ້ຄິດ:
   ກ. ມີຫຍັງແດ່ທີ່ເຮົາຮູ້ກ່ຽວກັບຟີລິບ?
   ຂ. ຄົນຢິວຮູ້ສຶກແນວໃດ ກ່ຽວກັບຊາວຊາມາເຣັຽ?
   ຄ. ຟີລິບໄປເຮັດຫຍັງຢູ່ຊາມາເຣັຽ?
5. ໃຫ້ເວລາເລັກນ້ອຍເພື່ອນັກຮຽນຈະໄດ້ຕອບ; ພານັກຮຽນເບິ່ງຄຳບັລຍາຍຫົວຂໍ້ "ຈາກຊາວຢິວໄປສູ່ຊາວຊາມາເຣັຽ"
6. ຖາມ: ແມ່ນຫຍັງຊ່ວຍ ຟີລິບໃຫ້ສຳເຣັດໃນຄັ້ງນີ້?
7. ອ່ານ ກິຈການ 8:26-38 ຊຶ່ງ ເວົ້າເຣື່ອງ ຟີລິບ ເປັນພຍານກັບຄົນເອທີໂອເປັຽ; ທ່ານອາດຈະໃຫ້ນັກຮຽນບາງຄົນອ່ານຊ່ວຍ.

8. ເບິ່ງຄຳບັລຍາຍຫົວຂໍ້ "ຈາກຊາວຊາມາເຣັຽໄປສູ່ຊາວເອທິໂອເປັຽຜູ້ນຶ່ງ"

<u>ນຳບົດຮຽນໄປໃຊ້ກັບຊີວິດ</u> (15 ນາທີ)

9. ບອກໃຫ້ນັກຮຽນສັງເກດເບິ່ງສິ່ງທີ່ຄ້າຍຄືກັນໃນສອງເຣື່ອງທີ່ຮຽນມາ (ຊາວຊາມາເຣັຽ ແລະ ຊາວເອທິໂອເປັຽ); ຄົນພວກນີ້ເຂົາບໍ່ແມ່ນ ຄົນຢິວ ຮ້ອຍເປີເຊັນ. ສຳລັບຟີລິບ ເຂົາຖືວ່າຄົນພວກນີ້ເປັນຊາວຕ່າງຊາດ ແລະເຂົາຈະຕ້ອງໄດ້ຕໍ່ສູ້ອຸປສັກຫລາຍຢ່າງເພື່ອຈະໄດ້ ເປັນພຍານໃຫ້ພວກເຂົາ; ແຕ່ພຣະວິນຍານບໍຣິສຸດໄດ້ຊ່ວຍ ຟີລິບ ໃຫ້ເກີດຜົນສຳເຣັດ.

10. ຖາມນັກຮຽນ:
   . ຄວາມສຳເຣັດຂອງຟີລິບໃນການເປັນພຍານມີຄວາມຫມາຍແນວໃດສຳລັບທ່ານ?
   . ພຣະວິນຍານບໍຣິສຸດຊ່ວຍ ຟີລິບໃນການເປັນພຍານມີຄວາມຫມາຍແນວໃດສຳລັບທ່ານ?
   . ມີອຸປສັກຫຍັງແດ່ທີ່ທ່ານຕ້ອງເອົາຊະນະເພື່ອຈະເປັນພຍານກັບຄົນທົ່ວໄປ?

11. ອະທິຖານຂໍພຣະວິນຍານບໍຣິສຸດໃຫ້ນຳພາໄປພົບຜູ້ໃດຜູ້ນຶ່ງເພື່ອຈະໄດ້ເປັນພຍານ; ອະທິຖານໃຫ້ນັກຮຽນແຕ່ລະຄົນໄດ້ເອົາຕົວຢ່າງຂອງ ຟີລິບ.

ຄຳແນະນຳສຳລັບຄູສອນ

ບົດຮຽນທີ 6

ເລືອກໄວ້ເພື່ອນຳຂ່າວເຣື່ອງຂອງພຣະເຈົ້າ

---

ຂໍ້ພຣະຄັມພີສຳລັບບົດຮຽນນີ້: ກິຈການ 9 :1-22, 26-29

ຂໍ້ພຣະຄັມພີສຳລັບເບື້ອງຫຼັງ: ກິຈການ 9: 1-31

ຈຸດສຳຄັນຂອງບົດຮຽນນີ້: ຫລັງຈາກໂປໂລຫລົບຕັ້ງໃຈໃໝ່ພຣະເຈົ້າໄດ້ເລືອກລາວ ໄວ້ເພື່ອເປັນພາຊະນະເພື່ອ ຈະນຳຂ່າວປະເສີດໄປຍັງບັນດາປະຊາຊາດ ແລະໄປຍັງຊາວອິສຣາເອັນ

ຄຳຖາມເພື່ອການສຳຣວດ: ພຣະເຈົ້າໄດ້ເລືອກທ່ານໄວ້ເຮັດຫຍັງແດ່ ຫລັງຈາກທ່ານໄດ້ກັບໃຈມາເຊື່ອ?

ຈຸດປະສົງຂອງການສອນ: ເພື່ອຊ່ວຍນັກຮຽນໃຫ້ແບ່ງປັນສິ່ງທີ່ພຣະເຈົ້າໄດ້ເລືອກເຂົາໄວ້ເຮັດ ຫລັງຈາກທີ່ເຂົາ ໄດ້ກັບໃຈເຊື່ອໃນອົງພຣະເຢຊູຄຣິດເຈົ້າ.

ແຜນສຳລັບການສອນ

ນຳເຣື່ອງເຂົ້າສູ່ຊີວິດຈິງ (5 ນາທີ)

1. ການສຶກສາພຣະທັມເທື່ອນີ້ຈະເວົ້າເຖິງການປ່ຽນແປງໃນຊີວິດຂອງບາງຄົນເວລາເຂົາເຈົ້າໄດ້ຮັບ ການເກີດໃໝ່ດ້ານຈິດວິນຍານ. ມີຫຍັງແດ່ທີ່ເກີດຂື້ນເຮັດໃຫ້ເຮົາປ່ຽນແປງໄປໃນທາງດີ?
2. ພຣະທັມຕອນນີ້ຈະເວົ້າເຖິງການຂຍາຍຕົວຂອງຄຣິສຕະຈັກ, ເວົ້າເຣື່ອງອັຄສາວົກ ຊື່ ໂປໂລ; ເຮົາຈະໄດ້ເບິ່ງການປ່ຽນແປງໃນຊີວິດຂອງເຂົາ;ຈາກຜູ້ຂົ່ມເຫງຄຣິສຕະຈັກ (ກິຈການ 9:1-2) ມາເປັນຜູ້ກັບ ໃຈເຊື່ອ (9:3-9) ແລະກາຍມາເປັນຜູ້ປະກາດພຣະທັມ (9:18-22).

ຖາມນັກຮຽນ: ພຣະເຈົ້າໄດ້ເລືອກທ່ານໄວ້ເຮັດຫຍັງແດ່ ຫລັງຈາກທ່ານໄດ້ກັບໃຈມາເຊື່ອ?

ນຳພາການສຶກສາພຣະທັມ (30 ນາທີ)

3. ອ່ານ ກິຈການ 9:3-9 ແລະພຍາຍາມແຍກຈຸດສຳຄັນກ່ຽວກັບການກັບໃຈຂອງໂປໂລ ; ເລີ້ມແຕ່ ຕອນໂປໂລ ໄດ້ພົບພຣະເຢຊູໃນຂະນະທີ່ເຂົາເດີນທາງໄປເມືອງດາມາເຊ.
4. ໃຫ້ນັກຮຽນບາງຄົນເວົ້າເຣື່ອງປະສົບການສ່ວນຕົວ ເວລາເຂົາມາເຊື່ອພຣະເຈົ້າ; ທ່ານອາດຈະເວົ້າ ເຣື່ອງຂອງທ່ານກ່ອນ (ໃຊ້ເວລາປະມານ 3 ນາທີ ຕໍ່ຄົນ).
5. ຖາມນັກຮຽນ: ທ່ານຄິດວ່າ ໂປໂລ ຮູ້ສຶກຢ່າງໃດ? (ໃນຕອນເຂົາພົບພຣະເຢຊູ).
6. ອານາເນັຽ (9:10-18) ແລະ ບາຣະນາບາ (9:2-29) ມີຄວາມສຳຄັນໃນຊີວິດຂອງ ໂປໂລ ຫລັງ ຈາກການກັບໃຈໃໝ່ຂອງເຂົາ. ແຕ່ລະຄົນມີສ່ວນໃນການຊ່ວຍເຫລືອ ໂປໂລ; ໃຫ້ນັກຮຽນອະ ທິບາຍວ່າອານາເນັຽ ແລະ ບາຣະນາບາ ໄດ້ເຮັດຫຍັງແດ່?

ນຳບົດຮຽນໄປໃຊ້ໃນຊີວິດ (15 ນາທີ)

7. ພານັກຮຽນພິຈາຣະນາ ຄຳຖາມສີ່ຂໍ້ ໃນຕອນສຸດທ້າຍຂອງບົດຮຽນ.
8. ຊັກຊວນນັກຮຽນໃຫ້ເປັນຜູ້ໜູນໃຈ ສຳລັບຜູ້ທີ່ກຳລັງຈະໄປຮັບໃຊ້ພຣະເຈົ້າ ຫລື ກຳລັງຕຽມຕົວຢູ່.
9. ຊັກຊວນນັກຮຽນໃຫ້ຊອກເບິ່ງວ່າມີຫຍັງແດ່ທີ່ ເຂົາ ແລະ ຄຣິສຕະຈັກສາມາດເຮັດ ເພື່ອຈະໜູນໃຈ ຜູ້ທີ່ຍັງ ບໍ່ໄດ້ເປັນຄຣິສຕຽນ ແລະ ບໍ່ໄດ້ເປັນສະມາຊິກໃນຄຣິສຕະຈັກ.
10. ຂໍໃຫ້ນັກຮຽນແຕ່ລະຄົນຕຽມຄຳພຍານເພື່ອຈະໄດ້ໃຊ້ໃນເວລາໄປເປັນພຍານກັບຄົນທົ່ວໄປ; ຄຳພຍານຈະແບ່ງເປັນ 3 ພາກ ຄື: 1. ຊີວິດກ່ອນໄດ້ພົບພຣະເຢຊູຄຣິດ, 2. ປະສົບການຕອນກັບໃຈໃໝ່, 3. ຊີວິດຫລັງຈາກໄດ້ຮັບພຣະເຢຊູຄຣິດມາເປັນພຣະເຈົ້າ.
11. ອະທິຖານເພື່ອໃຫ້ນັກຮຽນມີໃຈກ້າທີ່ຈະເປັນພຍານ.

ຄຳແນະນຳສຳລັບຄູສອນ

ບົດຮຽນທີ 7

ເປີດຕາພວກເຮົາໃຫ້ເຫັນໂລກອັນກວ້າງໃຫຍ່

----------------------------------------------------------------

ຂໍ້ພຣະຄັມພີສຳລັບບົດຮຽນນີ້: ກິຈການ 10:1-5, 9-17, 23-48

ຂໍ້ພຣະຄັມພີສຳລັບເບື້ອງຫຼັງ: ກິຈການ 10

<u>ຈຸດສຳຄັນຂອງບົດຮຽນນີ້:</u> ພຣະເຈົ້າຊົງເປີດຕາຂອງເປໂຕເພື່ອເຂົາຈະໄດ້ໄປເປັນພຍານເຣື່ອງພຣະເຢຊູຄຣິດໃຫ້ກັບໂກເນຣິໂອ ແລະຄອບຄົວ

ຄຳຖາມເພື່ອການສຳຣວດ: ມີໂອກາດສຳລັບການເປັນພຍານຢູ່ໃສແດ່ ທີ່ພຣະເຈົ້າຈະຕ້ອງເປີດຕາຂອງທ່ານແລະຄຣິສຕະຈັກໃຫ້ໄດ້ເຫັນ?

<u>ຈຸດປະສົງຂອງການສອນ:</u> ຊັກຊວນນັກຮຽນໃຫ້ຊອກໂອກາດໃນການເປັນພຍານ ໃນບ່ອນທີ່ເຂົາແລະຄຣິສຕະຈັກບໍ່ໄດ້ໃຫ້ຄວາມສົນໃຈມາກ່ອນ.

ແຜນສຳລັບການສອນ

<u>ນຳເຣື່ອງເຂົ້າສູ່ຊີວິດຈິງ</u> (5 ນາທີ)

1. ຊ່ວຍນັກຮຽນໃຫ້ເຫັນບັນຫາທີ່ທຸກໆຄົນມີຄືກັນ ເຣື່ອງຄວາມລັງກຽດສຽດສີ. ຄວາມລັງກຽດສຽດສີແມ່ນຫຍັງ? ແມ່ນການຮູ້ສຶກ ຫລື ຕັດສິນລ່ວງໜ້າ ກ່ຽວກັບບຸກຄົນ ຫລື ສິ່ງຂອງ ທັ້ງໆທີ່ທ່ານບໍ່ຮູ້ເຣື່ອງແນ່ນອນ ແລະຄວາມຈິງ. ຖາມນັກຮຽນ: ມີການລັງກຽດສຽດສີປະເພດໃດແດ່ທີ່ເຮົາໄດ້ຍິນຢູ່ເລື້ອຍໆ (ຄົນດຳເປັນຄົນມັກຖຽງ...).
2. ຖາມນັກຮຽນ: ຄວາມລັງກຽດສຽດສີ ແນວໃດແດ່ທີ່ເປັນອຸປສັກໃນການສ້າງຄວາມສັມພັນ?
3. ຄຣິສຕະຈັກໃນສມັຍແລກ ບໍ່ຢາກອອກໄປປະກາດກັບຄົນຕ່າງຊາດເພາະເຂົາເຈົ້າຖືວ່າຊາວຕ່າງດ້າວເປັນຄົນບໍ່ບໍຣິສຸດ, ເປັນຄົນທີ່ບໍ່ສົມຄວນຈະໄດ້ຮັບພຣະຄຸນຈາກພຣະເຈົ້າ. ເປໂຕ ຝືນໃຈອອກໄປປະກາດກັບ ໂກເນຣິໂອ. ພຣະເຈົ້າ ໄດ້ເປີດຕາເຂົາໃຫ້ເຫັນໂລກກວ້າງອອກໄປ. ພານັກຮຽນເບິ່ງ ຄຳຖາມເພື່ອການສຳຣວດ.

ນຳພາການສຶກສາພຣະທັມ (30 ນາທີ)

4. ອ່ານ ແລະ ອະທິບາຍ ກິຈການ 10: 1-8; ທ່ານອາດຈະໃຫ້ນັກຮຽນຫລາຍຄົນອ່ານຊ່ວຍ.
5. ຖາມນັກຮຽນ: ໂກເນຣິໂອ ເປັນຄົນຖືສາສນາເຄັ່ງຄັດ; ມີອຸປສັກຫຍັງແດ່ທີ່ເຂົາຕ້ອງຜ່ານເພື່ອຈະເຮັດໃນສິ່ງທີ່ຕົນໄດ້ເຫັນຈາກນິມິດຂອງພຣະເຈົ້າ?
6. ຖ້າທ່ານໄດ້ເຫັນນິມິດເໝືອນ ໂກເນຣິໂອ ທ່ານຈະເຮັດແນວໃດ?
7. ອ່ານກິຈການ 10: 9-17; ເບິ່ງຄຳບັລຍາຍໃນຫົວຂໍ້ ເປໂຕເຫັນນິມິດເຣື່ອງຄົນຕ່າງຊາດຊື່ໂກເນຣິໂອ. ຄຳຖາມ: ມີຫຍັງແດ່ທີ່ແຕກຕ່າງກັນລະຫວ່າງນິມິດຂອງ ເປໂຕ ແລະຂອງ ໂກເນຣິໂອ? ຄຳວ່າ "ສິ່ງທີ່ພຣະເຈົ້າຊົງຊຳຣະແລ້ວ ຝ່າຍທ່ານຢ່າຖືເປັນຂອງ

ຕ້ອງຫ້າມ" ມີຄວາມຫມາຍແນວໃດ?

8. ທົບທວນການພົບກັນລະຫວ່າງ ເປໂຕ ແລະ ໂກເນຣີໂອ ໃນ 10ະ 23-48. ເນັ້ນ 10ະ47;
ຖາມນັກຮຽນ: ເປໂຕມີເຈດຕະນາແນວໃດເຂົາຈຶ່ງຖາມແບບນັ້ນ?

ນຳບົດຮຽນໄປໃຊ້ໃນຊີວິດ (15 ນາທີ)

9. ຖາມນັກຮຽນ: ມີຄົນກຸ່ມໃດໃນເທັກຊັດ ທີ່ພວກເຮົາບໍ່ຢາກໄປເປັນພຍານກັບພວກເຂົາ
ເພາະຄວາມລັງກຽດສຽດສີ? (ຄົນຕ່າງຜີວ, ນັກໂທດ, ຄົນຖານະຕ່ຳ...)

10. ມີຫຍັງແດ່ທີ່ເຮົາສາມາດເຮັດໄດ້ກັບກຸ່ມຄົນທີ່ເຮົາບໍ່ເຄີຍໄດ້ປະກາດມາກ່ອນເພາະການ
ລັງກຽດສຽດສີ?

11. ອະທິຖານເພື່ອກຸ່ມຕ່າງໆທີ່ເຮົາຄວນຈະໄປປະກາດເຣື່ອງພຣະເຈົ້າ.

<u>ຄຳແນະນຳສຳລັບຄູສອນ</u>

<u>ບົດຮຽນທີ 8</u>

<u>ມີໃຈກ້າຫານພຽງພໍທີ່ຈະປ່ຽນແປງ</u>

---------------------------------------------------------------------

<u>ຂໍ້ພຣະຄັມພີສຳລັບບົດຮຽນນີ້:</u> ກິຈການ 11:1-4,15-26
<u>ຂໍ້ພຣະຄັມພີສຳລັບເບື້ອງຫຼັງ:</u> ກິຈການ 11
<u>ຈຸດສຳຄັນຂອງບົດຮຽນນີ້:</u> ຄຣິສຕະຈັກທີ່ກຸງເຢຣູຊາເລັມ ແລະທີ່ເມືອງ ອັນຕີໂອເຂັຽ ຕຽມພ້ອມທີ່ຈະອອກໄປປະກາດກັບຄົນທົ່ວໄປທີ່ບໍ່ແມ່ນຊາວຢິວ

<u>ຄຳຖາມເພື່ອການສຳຣວດ:</u> ຄຣິສຕະຈັກຈະປ່ຽນແປງ ແລະຍອມເຮັດຕາມໜ້າທີ່ຮັບຜິດຊອບທີ່ພຣະເຈົ້າໄດ້ມອບໝາຍໃຫ້ໄດ້ແນວໃດ?
<u>ຈຸດປະສົງຂອງການສອນ:</u> ເພື່ອຊ່ວຍນັກຮຽນໃຫ້ຮູ້ວ່າຄຣິສຕະຈັກຈຳເປັນຕ້ອງປ່ຽນແປງຫຍັງແດ່ເພື່ອຈະໄດ້ເຮັດໜ້າທີ່ຮັບຜິດຊອບທີ່ພຣະເຈົ້າໄດ້ມອບໝາຍໃຫ້.

<u>ແຜນສຳລັບການສອນ</u>

<u>ນຳເຣື່ອງເຂົ້າສູ່ຊີວິດຈິງ</u> (5 ນາທີ)

1. ຖາມນັກຮຽນ: ກ. ພຣະເຈົ້າກຳລັງເຮັດຫຍັງຢູ່ໃນໂລກ? (ໂຜດມະນຸດໃຫ້ພົ້ນ), ຂ. ມີຫຍັງແດ່ທີ່ພວກເຮົາຄວນເຮັດສຳລັບພຣະເຈົ້າ? (ປ່ອຍໃຫ້ພຣະເຈົ້າທຳງານຜ່ານເຮົາ), ຄ. ມີຫຍັງແດ່ທີ່ພຣະເຈົ້າກຳລັງເຮັດ ແລະພຣະອົງກຳລັງລໍຖ້າເຮົາໃຫ້ຮ່ວມງານກັບພຣະອົງ?
2. ເວົ້າເຣື່ອງຄວາມສຳຄັນຂອງ ພຣະວິນຍານບໍຣິສຸດ ໃນການຮັບໃຊ້ ແລະ ຄຸນວຸດທິ ຂອງຜູ້ນຳໃນການເຮັດພາຣະກິດຂອງພຣະເຈົ້າ. ເປໂຕ ແລະ ບາຣະນາບາ ເປັນຜູ້ນຳທີ່ພຣະເຈົ້າຊົງໃຊ້. ໃນ ກິຈການ 11, ເຮົາໄດ້ເຫັນວ່າ ມະນຸດບໍ່ສາມາດທີ່ຈະລ້ອມຮົ້ວກັ້ນພຣະເຈົ້າ; ພຣະວິນຍານບໍຣິສຸດຂອງພຣະເຈົ້າ ຊົງທຳງານແບບບໍ່ມີຂອບເຂດ, ບໍ່ເລືອກເຊື້ອຊາດ ແລະ ສາສນາ.

<u>ນຳພາການສຶກສາພຣະທັມ</u> (30 ນາທີ)

3. ນຳນັກຮຽນສຶກສາຄຳບັລຍາຍໃນຫົວຂໍ້ <u>ການປ້ອງກັນຕົວຂອງເປໂຕ ແລະ ການຕໍ່ສູ້ຂອງຊາວຢິວ</u>. ເປໂຕ ມີປັນຫາກັບຄົນຢິວເພາະເຂົາເຮັດຜິດປະເພນີໂດຍການໄປພົບຄົນຕ່າງຊາດ; ຄົນຢິວ ສົນໃຈເຣື່ອງການລະເມີດຮີດຄອງ ຫລາຍກວ່າການກັບໃຈຂອງຄົນຕ່າງຊາດທີ່ເມືອງກາຍຊາເຣັຽ. ຖາມ: ມີເຣື່ອງເລັກນ້ອຍແນວໃດແດ່ ທີ່ເຄີຍກີດກັ້ນວຽກງານຂອງພຣະເຈົ້າໃນຄຣິສຕະຈັກ?
4. ອ່ານ ກິຈການ 11:1-4; ຖາມ: ມີຄຸນວຸດທິ ຂອງຜູ້ນຳແນວໃດແດ່ທີ່ເຮົາສາມາດຮຽນຮູ້ຈາກເປໂຕ? ກ. ເປໂຕສາມາດຕອບການຕິຕຽນໂດຍບໍ່ຕ້ອງໂຕ້ຖຽງ, ຂ. ເປໂຕບໍ່ໄດ້ປະຕິເສດການກະທຳຂອງເຂົາ ແຕ່ ເປໂຕ ອະທິບາຍເຫດຜົນທີ່ເຂົາຕ້ອງເຮັດເຊັ່ນນັ້ນ.
5. ສຳຣວດເບິ່ງຄຳບັລຍາຍໃນຫົວຂໍ້ <u>ເວລາພຣະວິນຍານບໍຣິສຸດກຳລັງທຳງານ</u>. ອ່ານພຣະທັມ ກິຈການ 11: 11-18. ບອກນັກຮຽນວ່າ ເວລາໃດທີ່ພຣະວິນຍານບໍຣິສຸດ ເລີ້ມທຳງານ, ເຮົາ

ຈະບໍ່ໄດ້ສົງສັຍວ່າສິ່ງນັ້ນມາຈາກພຣະເຈົ້າ ເພາະພຣະອົງເຮັດສິ່ງທີ່ມະນຸດເຮັດບໍ່ໄດ້; ມະນຸດບໍ່ສາມາດທີ່ຈະຫ້າມພຣະເຈົ້າບໍ່ໃຫ້ໂຜດຄົນຕ່າງຊາດ.

6. ອ່ານ ກິຈການ 11:19-2; ເບິ່ງຄຳບັລຍາຍໃນຫົວຂໍ້ ຄຣິສຕະຈັກຂອງຊາວຕ່າງຊາດຂຍາຍຕົວ. ຄຣິສຕະຈັກສົ່ງ ບາຣະນາບາ ໄປເມືອງອັນຕີໂອເຂັຽ; ສຳຣວດເບິ່ງຄຸນວຸດທີໃນການເປັນຜູ້ນຳຂອງ ບາຣະນາບາ (ການຮູ້ສັງເກດ, ການໃຫ້ຄວາມໜູນໃຈ).

ນຳບົດຮຽນໄປໃຊ້ໃນຊີວິດ (15 ນາທີ)

7. ຂໍໃຫ້ນັກຮຽນຕອບ ຄຳຖາມເພື່ອການສຳຣວດ : ຄຣິສຕະຈັກຈະປຣັບແປງ ແລະຍອມເຮັດຕາມໜ້າທີ່ຮັບຜິດຊອບທີ່ພຣະເຈົ້າໄດ້ມອບໝາຍໃຫ້ໄດ້ແນວໃດ?
8. ຊັກຊວນໃຫ້ນັກຮຽນພາກັນເປີດຕາໃຫ້ກວ້າງອອກເພື່ອຈະໄດ້ເຫັນໂອກາດສຳລັບການເປັນພຍານ ຫລື ໂອກາດເພື່ອການຮັບໃຊ້.

ຄຳແນະນຳສຳລັບຄູສອນ

ບົດຮຽນທີ 9

ຕ້ອນຮັບທຸກຄົນເໝືອນດັ່ງພຣະເຈົ້າໄດ້ຊົງກະທຳ

--------------------------------------------------------------------

ຂໍ້ພຣະຄັມພີສຳລັບບົດຮຽນນີ້: ກິຈການ 15:1-22
ຂໍ້ພຣະຄັມພີສຳລັບເບື້ອງຫຼັງ: ກິຈການ 13:1-15:35
ຈຸດສຳຄັນຂອງບົດຮຽນນີ້: ການປະຊຸມໃນກຸງເຢຣູຊາເລັມຍອມຮັບຮູ້ວ່າຂ່າວປະເສີດເປັນຂອງທຸກໆຄົນຜ່ານພຣະຄຸນທາງຄວາມເຊື່ອແລະກອງປະຊຸມໄດ້ຂໍໃຫ້ຄຣິສຕຽນຊາວຕ່າງຊາດພາກັນຫລີກເວັ້ນການປະພຶດທີ່ຈະກີດກັ້ນຄວາມສັມພັນ.

ຄຳຖາມເພື່ອການສຳຣວດ: ມີຫຍັງແດ່ທີ່ເຮົາໄດ້ເພີ້ມເຕີມໃສ່ຂ່າວປະເສີດເຣື່ອງຄວາມລອດພົ້ນ? ມີຫຍັງແດ່ທີ່ຄຣິຕະຈັກຂອງທ່ານໄດ້ເຮັດເພື່ອໃຫ້ຄວາມສັມພັນແຜ່ໄປເຖິງຄົນທຸກຄົນທີ່ພຣະເຈົ້າໄດ້ຊົງຮັບໄວ້ແລ້ວ?
ຈຸດປະສົງຂອງການສອນ: ນຳພານັກຮຽນແລະຄຣິສຕະຈັກຂອງເຮົາໃຫ້ຕຽມພ້ອມທີ່ຈະຕ້ອນຮັບຄົນທັງຫລາຍທີ່ພຣະເຈົ້າໄດ້ຊົງຮັບໄວ້ແລ້ວ.

ແຜນສຳລັບການສອນ

ນຳເຣື່ອງເຂົ້າສູ່ຊີວິດຈິງ (5 ນາທີ)

1. ເນັ້ນເຖິງຄວາມສຳຄັນໃນການຮຽນພາກນີ້ ເພາະເປັນເຣື່ອງທີ່ຈະຖືກກັບຊີວິດຂອງແຕ່ລະຄົນ; ຖາມ: ເຮົາມີວິທີໃດແດ່ທີ່ຈະໃຊ້ໃນການແກ້ໄຂ ການຂັດແຍ້ງ? (ຕີກັນ, ອ້າກັນ, ຂື້ນສານ, ...)
2. ກິຈການ 15 ເປັນຕົວຢ່າງທີ່ດີໃນການແກ້ໄຂການຂັດແຍ້ງພາຍໃນຄຣິສຕະຈັກສມັຍກ່ອນ ແລະໃນສມັຍປັດຈຸບັນ.
3. ໃຫ້ນັກຮຽນບາງຄົນຕອບຄຳຖາມຢູ່ໃນ ຄຳຖາມເພື່ອການສຳຣວດ.

ນຳພາການສຶກສາພຣະທັມ (30 ນາທີ)

4. ອ່ານ ກິຈການ 15: 1-3; ຕັ້ງຄຳຖາມວ່າ: ກ. ແມ່ນຫຍັງຄື ບັນຫາ ໃນພຣະທັມທີ່ອ່ານມາ? ຂ. ບັນຫານີ້ສຳຄັນແນວໃດຕໍ່ຄວາມສັມພັນໃນຄຣິສຕະຈັກ? ຄ.ບັນຫານີ້ສຳຄັນແນວໃດຕໍ່ການປະກາດຂ່າວປະເສີດທີ່ ອັນຕີໂອເຂັຽ?
5. ຄວາມເຫັນຂອງການປະຊຸມໃນກຸງເຢຣູຊາເລັມ ມີຄວາມສຳຄັນທີ່ສຸດໃນການປະກາດກັບຄົນຕ່າງຊາດ. ອ່ານ ກິຈການ 15: 4-22; ຖາມນັກຮຽນ: ກ. ບັນຫາສຳຄັນມີຫຍັງແດ່? ຂ. ຜູ້ນຳເຊັ່ນ ເປໂຕ ແລະ ຢາໂກໂບ ມີຄວາມສຳຄັນບໍ່ ໃນການຈະຕົກລົງກັນ? ຄ. ການສົ່ງຈົດໝາຍໄປຫາຄຣິສຕະຈັກເຣື່ອງຄຳຕົກລົງຂອງກອງປະຊຸມສຳຄັນບໍ່?
6. ເບິ່ງຄຳບັລຍາຍໃນຫົວຂໍ້ ເປໂຕກ່າວປາສັຍຕໍ່ກອງປະຊຸມ. ພິຈາຣະນາເບິ່ງ 4 ຈຸດສຳຄັນໃນຄຳປາສັຍ; ໃຫ້ນັກຮຽນຄົນນຶ່ງອ່ານ.

7. ອ່ານ ກິຈການ 15: 19-23; ສັງເກດເບິ່ງຄຸນວຸດທິ ຂອງຜູ້ນຳໃນຄຳເວົ້າຂອງ ຢາໂກໂບ. ອ່ານຄຳສເນີຂອງຢາໂກໂບຕໍ່ກອງປະຊຸມ.
8. ຄຳບັລຍາຍໃນຫົວຂໍ້ <u>ຢາໂກໂບປ້ອງກັນເປໂຕ</u> , ໂດຍສະເພາະພາກສຸດທ້າຍຂອງຄຳບັລຍາຍ, ມີຄຳຕອບສຳລັບບັນຫາທີ່ກຳລັງໂຕ້ຖຽງກັນ. ຢາໂກໂບແນະນຳເຣື່ອງຂຽນຈົດຫມາຍແລະເຣື່ອງການສັ່ງສອນ ຄຣິສຕຽນຊາວຕ່າງຊາດເປັນທີ່ພໍໃຈຂອງທຸກໆຝ່າຍ.

<u>ນຳບົດຮຽນໄປໃຊ້ໃນຊີວິດ</u> (15 ນາທີ)

9. ຊັກຊວນນັກຮຽນໃຫ້ປຽບທຽບ ເຣື່ອງທີ່ເກີດຂຶ້ນໃນ ກິຈການ 15 ໃສ່ກັບສະພາບຂອງຄຣິສຕະຈັກໃນສມັຍປັດຈຸບັນ; ໃຊ້ຄຳຖາມດັ່ງຕໍ່ໄປນີ້: ກ. ເຮົາເຄີຍໃຫ້ບັນຫາເລັກນ້ອຍຢຸດຢັ້ງວຽກງານເຣື່ອງປ່າວປະກາດບໍ່? ຂ. ຜູ້ນຳໃນຄຣິສຕະຈັກ ກ້າທີ່ຈະຢືນຕໍ່ສູ້ເພື່ອໃຫ້ຄຣິສຕະຈັກໄດ້ກ້າວຫນ້າຕໍ່ໄປບໍ່? ຄ. ເຮົາເຄີຍຂັດຂວາງຄົນທີ່ແຕກຕ່າງກັບເຮົາບໍ່ໃຫ້ເຂົ້າມາຮ່ວມໃນ ຄຣິສຕະຈັກບໍ່?
10. ມີຫຍັງແດ່ທີ່ທ່ານຢາກໃຫ້ມີການປ່ຽນແປງໃນຄຣິສຕະຈັກຂອງທ່ານຫລັງຈາກໄດ້ສຶກສາບົດຮຽນນີ້? ມີຫຍັງແດ່ທີ່ທ່ານຈະຕ້ອງປ່ຽນແປງ ເພື່ອຄຣິສຕະຈັກຈະໄດ້ຮັບຄົນທຸກຄົນທີ່ພຣະເຈົ້າຊົງຮັບໄວ້ແລ້ວ ໃຫ້ດີກ່ວານີ້?

# ບົດທີ 10

## ເຮັດຢ່າງໃດຈຶ່ງຈະຣອດພົ້ນໄດ້?

---

<u>**ຂໍ້ພຣະຄັມພີສຳລັບບົດຮຽນນີ້:**</u> ກິຈການ 16:11-15, 22-34
<u>**ຂໍ້ພຣະຄັມພີສຳລັບເບື້ອງຫລັງ:**</u> ກິຈການ 15:36-16:40
<u>**ຈຸດສຳຄັນຂອງບົດຮຽນນີ້:**</u> ຄວາມຣອດພົ້ນແມ່ນເພື່ອທຸກໆຄົນທີ່ມີຄວາມເຊື່ອໃນພຣະຄຣິດ

<u>**ຄຳຖາມເພື່ອການສຳຣວດ:**</u> ຂ້ອຍຈະເຮັດຫຍັງແດ່?-- ຜູ້ອື່ນໆເດ?--ເພື່ອຈະໄດ້ຮັບຄວາມຣອດ
<u>**ຈຸດປະສົງຂອງບົດຮຽນນີ້:**</u> ເພື່ອໃຫ້ຈະແຈ້ງວ່າຜູ້ເຊື່ອໄດ້ຮັບຄວາມຣອດຢ່າງໃດ

<u>ແຜນການສອນ</u>

1. ຊອກຫາແຜນທີ່ຂອງການເດີນທາງຂອງໂປໂລ ແລ້ວເວົ້າຫຍໍ້ໆ ໃນການອອກຈາກເມືອງອັນຕີໂອກ ໄປຫາ ເມືອງຟີລິບປອຍ (ກິຈການ15:35-16:12). ໃນຂະນະທີ່ເລົ່າໄປນັ້ນ ໃຫ້ຊີ້ໄປພ້ອມ

2. ໂປໂລໄປທົ່ວທຸກເມືອງ,ທຸກບ້ານ ແລະທົ່ວທຸກຊົນຊາດ ໃນເຂດນັ້ນ. ແລະຄົນໃນເຂດນັ້ນໃນແຕ່ລະເຮືອນອາດຈະໄດ້ຍິນເຣື່ອງຂອງພຣະເຈົ້າ ແລະກໍອາດຈະມີພຣະຄັມພີຢູ່ໃນແຕ່ລະເຮືອນ.

3.ບົດຮຽນໃນວັນນີ້ ແມ່ນຈະຮຽນເຣື່ອງ: ເຮັດຢ່າງໃດຈຶ່ງຈະໄດ້ຮັບຄວາມຣອດ?
ອາດຈະອະທິບາຍໄປວ່າ ຄວາມຣອດນັ້ນບໍ່ໄດ້ຢູ່ກັບການທີ່ມີພຣະຄັມພີ, ບໍ່ໄດ້ຢູ່ກັບການສ້າງຄວາມດີ, ບໍ່ໄດ້ຢູ່ກັບການອ່ານພຣະຄັມພີເກັ່ງ ..... ແຕ່ແມ່ນຂຶ້ນຢູ່ກັບການຮັບເອົາພຣະເຈົ້າ, ແມ່ນການເປີດຈິດ ໃຈຮັບເອົາພຣະຄຳຂອງພຣະເຈົ້າ. ຕົວຢ່າງນາງລີເດັຽ (ກິຈການ 16:14-15)
ເມື່ອອ່ານພຣະຄັມພີແລ້ວ ເຮົາຈະເຫັນຊີວິດສອງຢ່າງຂອງນາງລີເດັຽຄື ຊີວິດການເປັນນັກການຄ້າ ແລະຊີວິດທີ່ມີພຣະວິນຍານຂອງພຣະເຈົ້າຊົງນຳ.

4.ອ່ານຂໍ້ພຣະທັມຕໍ່ໄປ ກິຈການ <u>16:16-32.</u> ໃນຂໍ້ນີ້ ໃຫ້ອ່ານເປັນແບບສົນທະນາ ຄືໃຫ້ຄົນນຶ່ງເປັນໂປໂລ, ຄົນນຶ່ງເປັນຍິງມີຜີຫມໍດູເຂົ້າສິງ, ຄົນນຶ່ງເປັນຄົນບັລຍາຍ, ແລະອີກຄົນນຶ່ງເປັນນາຍທັມມະໂຮງ ເມື່ອອ່ານສຸດແລ້ວໃຫ້ວາງຄຳຖາມ:
   ກ. ປະວັດແລະຫນ້າທີ່ຂອງນາຍທັມມະໂຮງ, ເຂົາມີຫນ້າທີ່ສູງ,ເປັນຄົນທີ່ມີກຽດ, ເປັນຫຍັງເຂົາຖາມໂປໂລແລະຊີລາວ່າ: "ທ່ານເອີຍ ຂ້ານ້ອຍຈະຕ້ອງເຮັດຢ່າງໃດຕໍ່ໄປຈຶ່ງຈະພົ້ນໄດ້?"
   ຂ. ທ່ານຄິດວ່າແນວໃດກ່ຽວກັບການສອນເຣື່ອງຄວາມຣອດພົ້ນ?
   (ຄວາມຣອດພົ້ນແມ່ນເພື່ອທຸກໆຄົນ,ບໍ່ວ່າຈະເປັນຍິວຫລືຕ່າງຊາດ,ບໍ່ວ່າຈະເປັນອະເມຣິກາຫລືລາວໄທກໍແລ້ວແຕ່, ບໍ່ວ່າຈະເປັນຈີນ ຍວນ ຫລື ທໍ້ ມົ້ງ ຢ້າວ ຄວາມຣອດເປັນຂອງທຸກຄົນ)

5. ໃຫ້ນັກຮຽນອ່ານພຣະຄັມພີ ກິຈການ 16:33-34 ແລ້ວກໍໃຫ້ສັງເກດເບິ່ງການປ່ຽນແປງຂອງຊີວິດ, ຄວາມສັມພັນຣະຫວ່າງ ໂປໂລກັບຊີລາ ແລະນາຍທັມມະໂຮງກັບຄອບຄົວ. ຄົນນຶ່ງຫລືສອງຄົນໃຫ້ຄວາມຄິດເຫັນ ຕາມແຕ່ມີເວລາ.

6. ຄໍາຖາມຊວນຄິດ:
   ກ. ແມ່ນຫຍັງເປັນສິ່ງກີດກັນບໍ່ໃຫ້ຄຣິສຕຽນເປັນພຍານຕໍ່ຄົນອື່ນໆ? (ລໍາອຽງ, ຂາດຄວາມເຊື່ອຫມັ້ນໃນຕົວເອງ, ບໍ່ເຂົ້າໃຈພຣະຄັມພີ, ບໍ່ມີເວລາ.....)
   ຂ. ທ່ານເຫັນຄວາມສັມພັນ ຂອງນາງລີເດັຽ ແລະຂອງນາຍທັມມະໂຮງມີການປ່ຽນແປງ. ແຕ່ໃນຄວາມຣອດພົ້ນທີ່ທ່ານວ່າທ່ານໄດ້ຮັບແລ້ວນັ້ນ ທ່ານມີຄວາມປ່ຽນແປງຫຍັງແດ່?

7. ໂປໂລຕອບຄໍາຖາມຂອງນາຍທັມມະໂຮງວ່າ: ຈົ່ງເຊື່ອວາງໃຈໃນພຣະເຢຊູເຈົ້າ ແລ້ວທ່ານຈະໄດ້ພົ້ນ ທັງຄົວເຮືອນຂອງທ່ານດ້ວຍ.
   ທ່ານເຄີຍຖືກຄົນອື່ນສອບຖາມເຣື່ອງຄວາມຣອດຫລືບໍ່?
   ທ່ານຕອບເຂົາວ່າຢ່າງໃດ?

8. ອະທິຖານປິດ

# ແບ່ງປັນຂ່າວປະເສີດຂອງພຣະເຈົ້າໃຫ້ທຸກໆຄົນ
# ບົດຮຽນທີ 11
# ໂປໂລເທສນາກ່ຽວກັບພຣະເຈົ້າທີ່ບໍ່ຮູ້ຈັກ

---

<u>**ຂໍ້ພຣະຄັມພີສຳລັບບົດຮຽນນີ້:**</u> ກິຈການ 17:16-34
<u>**ຂໍ້ພຣະຄັມພີສຳລັບເບື້ອງຫລັງ:**</u> ກິຈການ 17
<u>**ຈຸດສຳຄັນຂອງບົດຮຽນນີ້:**</u> ໂປໂລພົບວິທີທາງທີ່ຈະບອກຄວາມຈິງໃຫ້ແກ່ຊາວກຸງອາແຖນ

<u>**ຄຳຖາມເພື່ອການສຳຫລວດ:**</u> ແມ່ນຫຍັງຄືຂົວຕໍ່ ເພື່ອຈະບອກໃຫ້ຄົນທັງຫລາຍໄດ້ຍິນ,ເຂົ້າໃຈ, ແລະຕອບສນອງຕໍ່ການປະກາດພຣະຄຳຂອງພຣະເຈົ້າ
<u>**ຈຸດປະສົງຂອງບົດຮຽນນີ້:**</u> ແມ່ນເພື່ອຊອກຫາຊ່ອງທາງແບ່ງປັນການປ່າວປະກາດໃຫ້ກັບຜູ້ທີ່ເຄັ່ງຄັດສາສນາ ໃນທຸກວັນນີ້

## <u>ແຜນການສອນສຳລັບຄຣູ</u>

(ສອນແບບສົນທະນາ)
1. ຜູ້ໃດແດ່ເຄີຍຖືກການຂົ່ມເຫັງໃນການປະກາດຫລືວ່າການເວົ້າເຣື່ອງພຣະເຢຊູຄຣິດ?
   ໃຫ້ນັກຮຽນຕອບຄົນນຶ່ງຫລືສອງຄົນ. ຫລືອາດຈະສົນທະນາກັນຈັກເລັກນ້ອຍ ຫລື ອາດຈະກ່າວເຖິງການໄປຢ້ຽມຢາມມາ.

2. ໃຫ້ນັກຮຽນຄົນນຶ່ງຫລືສອງຄົນ, ອ່ານພຣະຄັມພີດ້ວຍສຽງດັງ (ກິຈການ 17:1-15)
   ອະທິບາຍຫຍໍ້ໆວ່າ ການປະກາດໃນສມັຍກ່ອນກໍມີການຂົ່ມເຫັງເຫມືອນກັນ. ແລະພວກຂົ່ມເຫັງນັ້ນກໍແມ່ນຄົນຍິວພວກດຽວກັນນັ້ນແຫລະ.

3. ກ່ອນຈະໃຫ້ນັກຮຽນ ອ່ານພຣະຄັມພີອີກ. ໃຫ້ໃຊ້ແຜນທີ່ ທີ່ມີຊື່ບອກເຖິງກຸງອາແຖນ. ຊີ້ໃຫ້ນັກຮຽນເຫັນແລະອະທິບາຍເຖິງຄວາມສຳຄັນຂອງເມືອງນັ້ນ ແລະອະທິບາຍເຖິງການຂາບໄຫ້ວຂອງເມືອງນັ້ນດ້ວຍ. ແລ້ວໃຫ້ນັກຮຽນອ່ານພຣະຄັມພີ (ກິຈການ 17:16-21)

4. ຖາມນັກຮຽນອີກວ່າເມື່ອເຫັນດັ່ງນີ້ແລ້ວ ໂປໂລມີຄວາມຮູ້ສຶກຢ່າງໃດ ?
   ອາດຈະມີການສົນທະນາກັນ ບາງຄົນອາດຈະເຫັນພ້ອມໂປໂລ ບາງຄົນອາດຈະບໍ່ເຫັນພ້ອມ

5. ໃນສມັຍນັ້ນກໍຍັງມີຫລາຍຄົນທີ່ບໍ່ເຂົ້າໃຈເຣື່ອງການຟື້ນຂຶ້ນມາຈາກຕາຍ, ພວກເຂົາຈຶ່ງສົນໃຈຢາກຕິດຕາມໂປໂລໄປແລະຍັງຢາກຟັງຄຳສອນອີກ. ສອງພວກທີ່ມາຖົກຖຽງກັບໂປໂລນັ້ນເຫັນວ່າ

ຜິດທັງສອງພວກ. ຄຣູອາດຈະລອງຖາມນັກຮຽນວ່າ ພວກໃດຖືກ, ແລະພວກໃດຜິດ.

6. ຖາມນັກຮຽນຕໍ່ໄປອີກວ່າ: ກ່ອນຈະມາເຖິງສະພາ ໂປໂລໄດ້ເຫັນຫຍັງແດ່ ?
ເມື່ອນັກຮຽນຕອບແລ້ວ, ໃຫ້ຄົນນຶ່ງອ່ານພຣະຄັມພີ ກິຈການ 17:22-32
ຫລັງຈາກນັ້ນໃຫ້ຄຣູ ອະທິບາຍ ວ່າໂປໂລຢາກກ່າວເຖິງຫຍັງ? ໂປໂລຢາກກ່າວເຖິງພຣະເຈົ້າຜູ້ຊົງພຣະຊົນຢູ່.
ແລະຄຣູກໍອາດຈະອາທິບາຍໄປຕາມເຈັ້ຽບົດຮຽນ ແຕ່ ຂໍ້ນຶ່ງ ຫາ ຂໍ້ເກົ້າ.

7. ການປ່າວປະກາດຂອງພວກເຮົາ ກໍບໍ່ແມ່ນວ່າທຸກຄົນຈະຮັບເຊື່ອຫມົດດອກ. ຍັງມີບາງພວກທີ່ຫົວເຢາະເຢີ້ຍ (ໃຫ້ຄຣູອະທິບາຍຫລືຍົກຕົວຢ່າງທີ່ປະສົບການມາກໍໄດ້.)

8. ຄໍາຖາມທົບທວນວ່ານັກຮຽນຈື່ຈໍາສິ່ງທີ່ຮຽນມາໄດ້ບໍ່.
ໃຫ້ຄຣູອ່ານຄໍາຖາມທົບທວນ ແລ້ວໃຫ້ນັກຮຽນຕອບ ໂດຍບໍ່ໃຫ້ຜູ້ດຽວຕອບ. ໃຫ້ຜັດປ່ຽນກັນຕອບເປັນຂໍ້ໆໄປ.

9. ຄຣູຖາມອີກ: ວັນນີ້ພວກເຮົາໄດ້ຮັບບົດຮຽນຫຍັງແດ່?
ໃຫ້ນັກຮຽນຕອບ ຕາມສມັກໃຈ, ຫ້າມບໍ່ໃຫ້ຊີ້ຕົວ

10. ຄຣູສະແດງຄວາມຂອບໃຈ ທີ່ໃຫ້ການປະກອບສ່ວນໃນບົດຮຽນ.

11. ອະທິຖານຂໍໃຫ້ໄດ້ພົບກັນອີກໃນອາທິດຫນ້າ.

# ແບ່ງປັນຂ່າວປະເສີດຂອງພຣະເຈົ້າໃຫ້ທຸກໆຄົນ
# ບົດຮຽນທີ 12
# ຈະຮັບໃຊ້ພຣະເຈົ້າດ້ວຍຄວາມສັດຊື່ຢ່າງໃດ

---

<u>ຂໍ້ພຣະຄັມພີສຳລັບບົດຮຽນນີ້:</u> ກິຈການ 20:17-37
<u>ຂໍ້ພຣະຄັມພີສຳລັບເບື້ອງຫລັງ:</u> ກິຈການ 20
<u>ຈຸດສຳຄັນຂອງບົດຮຽນນີ້:</u> ຊີວິດແລະການປ່າວປະກາດຂອງໂປໂລທີ່ເມືອງເອເຟໂຊເປັນຕົວຢ່າງທີ່ດີຂອງຜູ້ນຳຄຣິສຕຽນຄວນເຮັດຕາມ.

<u>ຄຳຖາມເພື່ອການສຳຣວດ:</u> ແມ່ນຫຍັງແມ່ນທ່າທີແລະການກະທຳພິເສດທີ່ສະແດງເຖິງລັກສະນະການຮັບໃຊ້ຂອງຄຣິສຕຽນ.
<u>ຈຸດປະສົງຂອງບົດຮຽນນີ້:</u> ເພື່ອພິຈາລາທ່າທີແລະການກະທຳຂອງທ່ານກັບຄຸນລັກສະນະຊີວິດແລະການປ່າວປະກາດຂອງໂປໂລ.

## <u>ແຜນການສອນຂອງຄຣູ</u>

1. ວາງຄຳຖາມໆນັກຮຽນ: ໃຜແດ່ເຄີຍພັດພາກຈາກຄົນທີ່ ເຄີຍຮ່ວມວຽກ ຮ່ວມງານ? ອາດຈະມີຫລາຍຄົນ, ແຕ່ໃຫ້ຄຣູ ຖາມອີກວ່າ ທ່ານມີຄວາມຮູ້ສຶກຢ່າງໃດໃນເວລາຈາກກັນ?
   ໃຫ້ໂອກາດນັກຮຽນເວົ້າແຕ່ລະຄົນ.

2. ອ່ານໃນບົດຮຽນຄຳນຳ : ເຣື່ອງການຮັບໃຊ້ຢ່າງສັດຊື່"
   ອາດຈະມີຫລາຍຄົນເປັນເຫມືອນ ໂບດທີ່ລຸງບົວເກດຮັບໃຊ້ຢູ່ ແລະກໍກຳລັງຈະຈາກໄປ.

3. ໃຫ້ນັກຮຽນອ່ານພຣະຄັມພີ ກິຈການ 20:17-24
   ຄຣູອະທິບາຍ:
   ການຮັບໃຊ້ຂອງໂປໂລ: ຊ່ວຍເຫລືອຜູ້ອື່ນ, ປິ່ນປົວພະຍາດ....
   ການສິດສອນຂອງໂປໂລ: ສິດສອນທັງກາງວັນກາງຄືນ, ທັງເທສນາ, ຫລັງຄາເຮືອນຕໍ່ຫລັງຄາເຮືອນ, ທັງຢິວແລະກຣີກ , ບ່ອນເປີດແປນ ແລະບ່ອນອື່ນໆ.
   ການຝຶກຝົນຜູ້ນຳ: ສ້າງຕັ້ງໂບດ, ການນຳພາ...
   ຄວາມເຊື່ອ : ບໍ່ມີສິ່ງໃດຈະແຍກຄວາມຮັກຂອງລາວກັບພຣະເຈົ້າໄດ້.
   ການຊົງນຳ: ໂປໂລໃຫ້ພຣະວິນຍານບໍຣິສຸດຊົງນຳ ບໍ່ວ່າຈະເປັນຕາຍຮ້າຍດີກໍຕາມ.(ໂຣມ 8:38-39)

4. ເພື່ອເປັນການປະກອບສ່ວນຂອງນັກຮຽນ.

ໃຫ້ນັກຮຽນຄົນນຶ່ງຫລືສອງຄົນອ່ານ ພຣະຄັມພີ ກິຈການ 20:25-31

5. ຖາມນັກຮຽນວ່າ ໂປໂລເຮັດວຽກຢູ່ເມືອງເອເຟໂຊ ໄດ້ຈັກປີ?
   ນັກຮຽນອາດຈະຕອບພ້ອມກັນໝົດທຸກຄົນວ່າ ສາມ ປີ
   ຖາມຕໍ່ໄປວ່າ ລາວເຮັດວຽກດ້ວຍຄວາມສຸກສະບາຍບໍ່? ບໍ່, ລາວເຮັດວຽກບໍ່ໄດ້ຢຸດ ທັງກາງວັນ ແລະກາງຄືນ ດ້ວຍນໍ້າຕາໄຫລ.
   ໂປໂລເຮັດມາຢ່າງນີ້, ບາງທີຜູ້ນຳບາງຄົນອາດຈະບໍ່ຮູ້ວ່າ ໂປໂລເຮັດຢ່າງໃດ ແລະຫຍຸ້ງຍາກປານໃດ. ບັດນີ້ ແມ່ນທີຂອງພວກທ່ານແລ້ວ, ເຖິງແມ່ນວ່າທ່ານຈະເຮັດຫລືບໍ່ເຮັດ ທ່ານກໍຈຳເປັນຕ້ອງເຮັດ. ໂປໂລນໍ້າຕາໄຫລບາງທີລາວອາດຈະເຫັນຜູ້ນຳຍັງອ່ອນຢູ່ ຢ້ານພວກເຂົາປົກຄອງບໍ່ໄດ້. ລາວຈຶ່ງຢໍ້າເຖິງຄຣູສອນປອມ, ເຂົາຈະມາຢາດແຍ່ງເອົາລູກແກະຂອງພຣະເຈົ້າໄປກິນ.
   ພຣະເຢຊູຮັກໂບດຂອງພຣະອົງ, ພຣະອົງໄດ້ເສັຽສະລະຊີວິດເພື່ອໂບດນັ້ນ. (ເອເຟໂຊ 5:25)

6. ໃຫ້ນັກຮຽນອ່ານຂໍ້ພຣະທັມ ກິຈການ 20: 32-38
   ເມື່ອອ່ານສຸດແລ້ວໃຫ້ຖາມວ່າ: ໂປໂລຝາກຜູ້ນຳເຫລົ່ານັ້ນໄວ້ກັບໃຜ ? ໄວ້ກັບພຣະເຈົ້າ ແລະ ພຣະທັມຂອງພຣະອົງ ຊຶ່ງຈະເປັນເຫດໃຫ້ພວກເຂົາເຈົ້າໄດ້ຮັບຄວາມຈະເຣີນ ແລະໄດ້ຮັບມໍຣະດົກ.
   ໂປໂລຍັງໄດ້ສະແດງເຖິງຄວາມບໍຣິສຸດໃນການເຮັດວຽກໃນຖ້າມກາງພວກເຂົາ. ແລະໃຫ້ພວກເຂົາຊ່ວຍເຫລືອຊຶ່ງກັນແລະກັນ.

7. ຄຣູຈະຊ່ວຍອະທິບາຍໃຫ້ນັກຮຽນເຂົ້າໃຈຕໍ່ໄປອີກວ່າ ເມື່ອເຖິງລາວຈາກກໍຕ້ອງຈາກ, ເມື່ອເຖິງລາວຢູ່ກໍຕ້ອງຢູ່.
   ເຖິງແມ່ນວ່າເຮົາຈະຈາກກັນໄປກໍຕາມ, ແຕ່ຄຣິສຕຽນພວກເຮົາຈະພົບກັນອີກເທື່ອນຶ່ງ, ຈະເປັນການພົບທີ່ມີຄວາມສຸກທີ່ສຸດ ແລະເປັນການພົບທີ່ບໍ່ມີວັນຈາກ.
   ຈົ່ງຂອບພຣະຄຸນພຣະເຈົ້າທີ່ອົງພຣະເຢຊູໄດ້ມາແປງທາງທີ່ພວກເຮົາຈະໄປນີ້ ແລະເປັນເສັ້ນທາງໃນການພົບກັນເທື່ອສຸດທ້າຍນີ້.

8. ອ່ານຄຳຖາມຊວນຄິດ: ແລ້ວໃຫ້ນັກຮຽນຕອບຜູ້ລະຂໍ້ ເພື່ອເປັນການທວນຄືນ

9. ຖາມນັກຮຽນວ່າ ພວກເຮົາໄດ້ບົດຮຽນຫຍັງແດ່ ໃນວັນນີ້
   ໃຫ້ນັກຮຽນຕອບຄົນນຶ່ງຫລືສອງຄົນ

10 ຂອບໃຈນັກຮຽນ ແລ້ວອະທິຖານປິດ

# ແບ່ງປັນຂ່າວປະເສີດຂອງພຣະເຈົ້າໃຫ້ແກ່ທຸກໆຄົນ
## ບົດຮຽນທີ 13

## ຈະປະກາດໃຫ້ສຳເຣັດຜົນຢ່າງໃດໃນຊີວິດ?

---

ຂໍ້ພຣະຄັມພີສຳລັບບົດຮຽນນີ້: ກິຈການ 28:16-31
ຂໍ້ພຣະຄັມພີສຳລັບເບື້ອງຫລັງ: ກິຈການ ບົດ 27 ແລະ 28
ຈຸດສຳຄັນຂອງບົດຮຽນນີ້: ແມ່ນເພື່ອໃຫ້ເຫັນວ່າ ໂປໂລໄປບ່ອນໃດລາວກໍປະກາດທີ່ນັ້ນ, ແລະ ຄຣິສຕະຈັກຂອງພວກເຮົາກໍແມ່ນພຍານໃຫ້ທຸກໆຄົນເຫັນການປະກາດ.
ຄຳຖາມເພື່ອການສຳຣວດ: ຂ້ອຍຈະເຮັດຢ່າງໃດກັບຊີວິດຂອງຂ້ອຍ? ຊີວິດຂອງໂປດຂ້ອຍມີສ່ວນກ່ຽວພັນກັບຊີວິດຂ້ອຍບໍ່ ?
ຈຸດປະສົງຂອງບົດຮຽນນີ້: ເພື່ອຊ່ວຍໃຫ້ທ່ານເຫັນວ່າ ຊີວິດຂອງການປະກາດທີ່ປະສົບຜົນສຳເຣັດນັ້ນແມ່ຂື້ນຢູ່ກັບຄວາມສັດຊື່ຕໍ່ພຣະເຈົ້າ.

### ແຜນການສອນສຳລັບຄຣູ

1. ຄຳຖາມສົນທະນາ: ເມື່ອທ່ານຈະເຣີນເຕີບໂຕ ຫລືເປັນຜູ້ໃຫ່ຍຂື້ນມາ ທ່ານມີເປົ້າຫມາຍວ່າຢາກເປັນຫຍັງ ? ທະຫານ, ຕຳຣວດ, ຂ້າຣາຊການ, ແພດ, ຫມໍ, ຄົນຂັບຣົດ, ຄົນຂັບຍົນ, ........
   ໃຫ້ຄຣູສອນຈົດລົງໃສ່ກະດານ.
   ຖາມຕໍ່ໄປອີກວ່າ ປັດຈຸບັນນີ້ທ່ານເຮັດວຽກຫຍັງ?
   ຄຣູອະທິບາຍຈັກຫນ້ອຍນຶ່ງວ່າ ບາງຄັ້ງສິ່ງທີ່ເຮົາຢາກເປັນ ເຮົາກໍບໍ່ໄດ້ເປັນ, ບາງຄັ້ງສິ່ງທີເຮົາຢາກເຮັດເຮົາກໍບໍ່ໄດ້ເຮັດ.

2. ເພື່ອເປັນການເຂົ້າເຣື່ອງເຂົ້າລາວ. ໃຫ້ຄຣູສອນ ຫລືໃຜຜູ້ນຶ່ງທີ່ອ່ານດີທີ່ສຸດໃນຫ້ອງຮຽນ ອ່ານຊ້າໆ ແລະຈະແຈ້ງ. ໃຫ້ນັກຮຽນຄົນອື່ນໆເບິ່ງໄປນຳດ້ວຍ. (ກິຈການ 27:21-26)
   ແລະ ໃຫ້ອ່ານ (ກິຈການ 28:1-10)
   ໃຫ້ຄຣູສອນອະທິບາຍເພີ້ມເຕີມ.ເຖິງການເດີນທາງວ່າມີຄວາມຫຍຸ້ງຍາກແລະຍາວນານປານໃດ. ໂປໂລ ມີທູດສວັນຂອງພຣະເຈົ້ານຳພາ (ຄົນຂອງພຣະເຈົ້າຈະຢູ່ບ່ອນໃດທູດສວັນກໍຊົງເຝົ້າຮັກສາ) ໃຫ້ເນັ້ນຫນັກບ່ອນທີ່ ໂປໂລຫນູນໃຈຄົນໃນເຮືອ, ທະຫານຍາມ, ຄົນຢູ່ໃນເກາະທີ່ລໍຖ້າເບິ່ງໂປໂລຕາຍຫລັງຈາກງູກັດ, ຍັງບໍ່ພໍທໍ່ນັ້ນໂປໂລຍັງໄດ້ປິ່ນປົວຄົນໄຂ້ດ້ວຍ.

໓. ມີສິ່ງໃດແດ່ບໍ່ທີ່ເຮັດ ໂປໂລມີຄວາມຍິນດີຫລາຍໃນການເດີນທາງ?
ທຸກໆບ່ອນທ່າເຮືອ ມີຄຣິສຕຽນມາຢື້ຢາມຖາມຂ່າວໂປໂລ. ອະທິບາຍເຖິງຄຣິສຕຽນ, ພວກເຮົາກໍມີຄວາມຍິນດີທີ່ເຫັນຄຣິສຕຽນ ມາຢື້ຢາມຖາມຂ່າວ, ຄວາມສຸກທຸກຊື່ງກັນແລະກັນ. ນີ້ລະຄືພຣະພອນນຶ່ງທີ່ພຣະເຈົ້າຊົງມອບໃຫ້ຄຣິສຕຽນທຸກໆຄົນ.

4. ອ່ານພຣະຄັມພີ ກິຈການ 28: 16-28 (ຈະໃຫ້ນັກຮຽນຄົນນຶ່ງຫລືສອງຄົນກໍໄດ້) ພະຍາຍາມຢ່າໃຫ້ຊໍ້າຄົນເກົ່າ.
ເມື່ອອ່ານແລ້ວໃຫ້ຄຣູວາງຄຳຖາມວ່າ:
ກ. ການປ່າວປະກາດໂປໂລປະກາດໃຫ້ໃຜກ່ອນ ? ພວກຢິວ
ຂ. ຫລັງຈາກນັ້ນໂປໂລປະກາດໃຫ້ໃຜ ? ພວກຕ່າງຊາດ
ຄ. ໂປໂລ ປະກາດເຖິງຫຍັງ ? ແຜ່ນດິນຂອງພຣະເຈົ້າ (ແຜ່ນດິນສວັນ)
ງ. ຄັນມີຄົນບໍ່ເຊື່ອ ແລ້ວ ໂປໂລຍົກຂໍ້ພຣະຄັມພີຕອນໃດອອກມາ ? ແລະມີຂໍ້ຄວາມວ່າຢ່າງໃດ?

5. ໃຫ້ນັກຮຽນອ່ານພຣະຄັມພີ ຕອນສຸດທ້າຍ (ກິຈການ 28:30-31)
ໃຫ້ຄຣູອະທິບາຍສມັຍໂປໂລຢູ່ໃນກຸງໂຣມ ວ່າລາວໄດ້ປ່າວປະກາດເຣື່ອງແຜ່ນດິນຂອງພຣະເຈົ້າຢູ່ທຸກເວລາ.
ໂປໂລຍັງໄດ້ຂຽນຈົດຫມາຍນີ້ໄປເຖິງຄຣິສຈັກຕ່າງໆ ແລະໃນນັ້ນຄຣິສຕະຈັກຂອງພວກເຮົາກໍຮວມຢູ່ໃນນີ້ ດ້ວຍ. (ຈົດຫມາຍ ຈາກກຸງໂຣມ ຫລືວ່າພຣະທັມ ໂຣມ)

6. ຄຣູຈະອ່ານຄຳຖາມຊວນຄິດ ເຫມືອນກັບວ່າທວນຄືນ.
ຖາມຄຳຖາມແລ້ວໃຫ້ນັກຮຽນຕອບ ວ່ານັກຮຽນ ໄດ້ຮຽນເອົາຫຍັງແດ່?
ເມື່ອຖາມຫມົດທຸກຄຳຖາມແລ້ວຄຣູຈະສລຸບບົດຮຽນ
ການປະກາດນັ້ນອົງພຣະເຢຊູຊົງສັ່ງໄວ້ກ່ອນທີ່ພຣະອົງຈະສະເດັດຂຶ້ນສູ່ສວັນ (ກຈ 1:8)

7. ຄຣູຈະຂອບໃຈ ນັກຮຽນ ແລ້ວ ສັນຍາວ່າຈະພົບກັນອີກໃນອາທິດຫນ້າ
ອະທິຖານປິດ